<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

**Copyright © 2007 by BAPTISTWAY PRESS®.**
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1- 4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1- 4
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 5-7
Bounchanh Vongsurith, Crievewood Baptist Church, Nashville, Tennessee
Editor for Lesson 5-7
Phaisane Somsith, Homeprakhoon Baptist Church, Dallas, Texas

Teaching Procedures Writer for Lesson 8- 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 8-10
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 11-13
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# <u>ຄໍາແນະນໍາສໍາລັບຄຣູສອນ</u>

# <u>ບົດຮຽນທີ 1</u>

# <u>ຈົ່ງໃຫ້ເສັ້ນເປັນຈຸດ ຕິດຕໍ່ກັນ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ໂຣມ 1:1-17

**<u>ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:</u>** ໂຣມ 1:1-17

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ພຣະກິດຕິຄຸນຂອງພຣະເຢຊູ ມີຄວາມໝາຍສໍາລັບຊີວິດຂອງພວກເຮົາແລະສໍາລັບ ປະວັດສາດດ້ວຍ ຖ້າພວກເຮົາຫາກມີຄວາມເຊື່ອ.

**<u>ຄໍາຖາມເພື່ອສໍາຣວດ:</u>** ອົງພຣະເຢຊູຊົງຈັດຕຽມຄວາມໝາຍນີ້ ໂດຍເຫດການໃດ ສໍາລັບຊີວິດຂອງພວກເຮົາແລະ ສໍາລັບປະວັດສາດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອຈະໃຫ້ຄວາມໝາຍຂອງຂ່າວປະເສີດ ແລະປະວັດສາດໄດ້ເຫັນເດັ່ນຊັດຂຶ້ນໃນຊີວິດ ຂອງເຮົາ

## <u>ແຜນການສິດສອນ</u>

### <u>ນໍາເຣື່ອງເຂົ້າສູ່ຊີວິດຈິງ</u>

1. ຖ້າພໍເປັນໄປໄດ້ໃຫ້ຊອກຫາແຜນທີ່ ສມັຍຂອງໂປໂລເດີນທາງ ຕິດໄວ້ຂ້າງຝາ ແລະຕິດຄໍາເວົ້າທີ່ວ່າ "ພຣະເຈົ້າ ສະເດັດມາໃນໂລກນີ້ເພື່ອຫຍັງ?" ຢູ່ເທິງແຜນທີ່ນັ້ນ.

2. ເຊີນນັກຮຽນທັງຫລາຍເອົາເຈັ້ຽບົດຮຽນອອກມາ ຄຣູຈະອະທິບາຍວ່າໃນ 3 ເດືອນ ຕໍ່ໄປນີ້ແມ່ນຈະຮຽນເຖິງ ການທໍາງານຂອງພຣະເຈົ້າໃນສມັຍຂອງໂປໂລ, ໃຫ້ຕິດຕາມທ່າທີຕ່າງໆ ວ່າພຣະເຈົ້າຍັງທໍາງານໃນສມັຍຂອງ ພວກເຮົາຢູ່ບໍ່.

3. ຊີ້ໃຫ້ເຫັນກຸງໂຣມໃນແຜນທີ່. ໃຊ້ເຈັ້ຽບົດຮຽນແລ້ວອະທິບາຍຄວາມສໍາຄັນຂອງໂຣມເຖິງການເປັນສູນກາງ ທີ່ຍິ່ງໃຫຍ່ຂອງໂລກໃນສມັຍນັ້ນ. ຊີ້ໃຫ້ເຫັນປະເທດອັງກິດ, ປະເທດອີຣັກ, ປະເທດຕູຣະກີ ແລະປະເທດອັຟຣິກາເຫນືອ.

### <u>ນໍາພາສຶກສາພຣະຄັມພີ</u>

4. ເອີ້ນໃຫ້ຜູ້ນຶ່ງອ່ານ ໂຣມ 1:1-7 ໃນກະດານໃຫ້ຄຣູຂຽນເປັນແຖວລົງໄປ
   **ເປັນໃຜ?** ໂປໂລກ່າວໃຫ້ກັບຕົວເອງວ່າ ລາວເປັນໃຜ? (1:1)
   **ແມ່ນຫຍັງ?** ໂປໂລກ່າວວ່າຂ່າວປະເສີດແມ່ນຫຍັງ? (1:2)
   **ເວລາໃດ?** ເວລາໃດພຣະເຈົ້າໄດ້ຊົງສັນຍາ ຂ່າວປະເສີດຂອງພຣະເຈົ້າ?
   **ຢ່າງໃດ?** ໂປໂລກ່າວເຖິງການຮຽກເອີ້ນຂອງພຣະເຈົ້າຢ່າງໃດ? (1:5)
   **ຢູ່ໃສ?** ໂປໂລຖືກເອີ້ນໃຫ້ປະກາດໄປຫາໃຜແລະຢູ່ໃສ? (1:5 ແລະ 7)
   ອີງຕາມພຣະຄັມພີ ໂຣມ1:6 ພວກເຮົາຖືກຮວມຢູ່ດ້ວຍຫລືບໍ່?

5. ເອີ້ນໃຫ້ຄົນນຶ່ງອ່ານ ໂຣມ 1:8-15 ໃຫ້ຟັງຄັກໆວ່າເປັນຫຍັງໂປໂລຈຶ່ງຂຽນຈົດຫມາຍສະບັບນີ້ " ຂ້າພະເຈົ້າຢາກມາຢ້ຽມຢາມທ່ານ ຂ້າພະເຈົ້າຢາກເຫັນພວກທ່ານ."

- ເປັນຫຍັງຄວາມເຊື່ອຂອງຊາວຄຣິສຕຽນກຸງໂຣມຈຶ່ງສຳຄັນແທ້ ?
- ເຫດຜົນ 3 ຢ່າງທີ່ໂປໂລຢາກຢ້ຽມຢາມພວກເຂົາມີຫຍັງແດ່? ເບິ່ງໃນຂໍ້ 11-13
- ໂຣມ 15:23-24 ໂປໂລກໍຍັງຢ້ຳອີກວ່າ ມີຄວາມປາຖນາຈະແວ່ຢ້ຽມຢາມ
- ເປັນຫຍັງໂປໂລຈຶ່ງວ່າຈຳເປັນແທ້? ເພື່ອຜູ້ໃດລາວຈຶ່ງຮູ້ສຶກວ່າຈຳເປັນ?

6. ຈຳໄວ້ວ່າ ໂຣມ 1:16-17 ແມ່ນຈຸດເນັ້ນຫນັກຂອງບົດຮຽນນີ້ ແລະກໍຍັງເປັນໃຈກາງຂອງຊີວິດຂອງໂປໂລດ້ວຍ. ຖາມ: ພຣະຄັມພີສອງຂໍ້ນີ້ຈະອະທິບາຍຂ່າວປະເສີດຢ່າງໃດ?

- ຂ່າວປະເສີດນີ້ຕຽມຄວາມລອດພົ້ນຢ່າງໃດ?
- ເປັນຫຍັງຄວາມຊອບທັມຈຶ່ງສຳຄັນສຳລັບພວກເຮົາ? (ອະທິບາຍຄວາມຊອບທັມຢູ່ໃນເຈັ້ຽບົດຮຽນ)
- ພວກເຮົາຈະໄດ້ຮັບຄວາມຊອບທັມຢ່າງໃດ?

ແບ່ງປັນພິເສດສຳລັບ "ຄວາມຊອບທັມຂອງພຣະເຈົ້າ" ເປັນຢ່າງໃດ? (ຄວາມລອດແມ່ນເພື່ອທຸກໆຄົນໂດຍທາງຄວາມເຊື່ອໃນພຣະເຢຊູຄຣິດເທົ່ານັ້ນ)

## <u>ນຳໃຊ້ໃນຊີວິດປະຈຳວັນ</u>

7. ລົ້ມຄືນລອງເບິ່ງດູວ່າພຣະຄັມພີສອນຫຍັງພວກເຮົາແດ່ສຳລັບວັນນີ້. ມີຜູ້ໃດແດ່ບໍ່ທີ່ຮູ້ວ່າພຣະເຈົ້າຊົງເອີ້ນມາໃຫ້ແບ່ງປັນຄວາມເຊື່ອໃຫ້ແກ່ຜູ້ອື່ນ?

8. ໃຫ້ນັກຮຽນພາກັນຕອບຄຳຖາມໃນເຈັ້ຽບົດຮຽນ ເພື່ອຈະນຳໄປໃຊ້ໃນຊີວິດປະຈຳວັນ.

9. ພາກັນອ້ອນວອນອະທິຖານ ເພື່ອຈະຕຽມຕົວນະມັສການພຣະເຈົ້າ

*ສຈ. ດຣ. ບຸນໂຣມ ພົມມະຈັນ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 2
# ບໍ່ມີຂໍ້ແກ້ຕົວ, ບໍ່ມີການຍົກເວັ້ນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 1: 18-32; 2:1-13

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຣມ 1:18-2:16

**ຈຸດສຳຄັນຂອງບົດຮຽນນີ້:** ທຸກໆຄົນ "ຈະຖືສາສນາຫລືບໍ່ຖື" ເປັນຄົນບາບທຸກຄົນ ບໍ່ມີການຍົກເວັ້ນໃດໆທັງນັ້ນ ໃນການປາກົດຕົວຕໍ່ພຣະພັກພຣະເຈົ້າ

**ຄຳຖາມເພື່ອສຳຣວດ:** ເປັນຫຍັງຂ້ອຍຈຶ່ງຈະຕ້ອງປາກົດຕົວຕໍ່ໜ້າພຣະເຈົ້າ-ຂ້ອຍເປັນຄົນດີຮອບຄອບແລ້ວເດ-ຂ້ອຍຕ້ອງຖືກຍົກເວັ້ນ.

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໄດ້ຊີ້ແຈງໃຫ້ເຫັນວ່າ "ຄົນນັບຖືສາສນາ" ແລະ "ຄົນບາບ" ຈະຫລີກຈາກການປາກົດຕົວຕໍ່ພຣະເຈົ້າ ແມ່ນບໍ່ໄດ້ເດັດຂາດ

## ຄົ້ນຄວ້າພ້ອມກັບການປະຕິບັດ

- ຢັ້ງຢືນວ່າພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ເສີມຂຍາຍການເຕີບໃຫ່ຍຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ຍົກສູງທຸກໆຄົນ ໂດຍເຫັນວ່າພວກເຂົາກໍແມ່ນພຣະລັກສະນະຂອງພຣະເຈົ້າ

## ແຜນການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຈົ່ງຊອກຫາຄຳເວົ້າທີ່ມີການພົວພັນຣະຫວ່າງຂ່າວຮ້າຍແລະຂ່າວດີ. ເວົ້າແຕ່ລະປໂຍກຕໍ່ໄປນີ້ແລ້ວໃຫ້ຫ້ອງຮຽນຕອບ.
   - ຕຳຣວດມາເຄາະທີ່ປະຕູບ້ານ
   - ຂ່າວລົມພາຍຸແຮງໃນທີວີວ່າຈະມາເຖິງພວກເຮົາເວລາ 8ໂມງແລງ
   - ເຣື່ອງຂ່າວລາຍລະອຽດໃນພາກຄ່ຳ
   - ດອກເຕື້ອາງຢາຄືໂມ້ໃຫ້ປ້າ.................
   - ມີໂທຣະສັບມາຫາຕອນ 2 ໂມງເຊົ້າ
   - ອຸປະຕິເຫດໃຫຍ່ຢູ່ຟຣີເວ ມີຄົນເສັຍຊີວິດ 2 ຄົນ
2. ແບ່ງປັນຂໍ້ພຣະຄັມພີອ່ານຈາກການເລີ້ມຕົ້ນຂອງເຈົ້າບົດຮຽນ

## ນຳພາສຶກສາພຣະຄັມພີ

3. ໃຫ້ຄົນສມັກໃຈອ່ານພຣະຄັມພີ ໂຣມ 1:18-25 ຖ້າມີພາສາລາວ ແລະພາສາໄທກໍຍິ່ງເປັນການດີເພາະເຮົາຈະໄດ້ເຫັນວ່າແຕກຕ່າງກັນ. "ທົ່ວໄປແລະສະເພາະເຈາະຈົງ" ຖາມ: ສອງຢ່າງນີ້ ແມ່ນການສຳແດງແບບໃດ 1:19-20? ທົ່ວໄປຫລືວ່າສະເພາະເຈາະຈົງ (ຄຳຕອບກໍຄືວ່າ ທົ່ວໄປ)

4. ໃຊ້ເຄື່ອງໝາຍໃນຕອນນີ້ "ຂ່າວຮ້າຍ ແມ່ນເລວຮ້າຍທີ່ສຸດ" ໃນເຈັ້ຽບົດຮຽນ
   - ທັມຊາດສຳແດງພຣະລັກສະນະຂອງພຣະເຈົ້າຫລາຍຢ່າງ (1:18-20)
   - ຄວາມຮູ້ສຶກສຳແດງຄວາມຈິງຂອງພຣະເຈົ້າ (2:14-15)
   - ມະນຸດສາມາດປະຕິເສດໄດ້ ເຂົາວ່າມີຄວາມຮູ້ຄວາມສລາດດ້ວຍຕົວຂອງເຂົາເອງ (1:21-22)
   - ຄວາມຈິງແລ້ວເຂົາຄວນໃຫ້ກຽດແກ່ພຣະເຈົ້າ ແຕ່ເຂົາຊ້ຳພັດໄປກາບໄຫວ້ພຣະເຈົ້າປອມ (1:23)
   - ພວກເຂົາປະຕິເສດພະເຈົ້າແຫ່ງຄວາມຈິງແລະຜູ້ທ່ຽງແທ້ (1:24-25)
   - ເວລາມະນຸດປະຕິເສດພຣະເຈົ້າ ພຣະເຈົ້າກໍປ່ອຍໃຫ້ມະນຸດໄປຕາມທາງຂອງເຂົາ ແລະປະເຊີນໜ້າກັບໂທດທີ່ເຂົາກະທຳເອງ. "ພຣະເຈົ້າຊົງປ່ອຍພວກເຂົາແລ້ວ...." (1:24,26,28)

5. ຂີດກະດານເປັນສອງຝ່າຍໆນຶ່ງຂຽນວ່າ **ພວກເຮົາມີ** ແລະອີກຝ່າຍນຶ່ງ ຂຽນວ່າ **ພວກເຮົາບໍ່ມີ**
   ອ່ານໂຣມ 2:1-11 ແລ້ວຕື່ມລົງໃນກ້ອງຂອງແຕ່ລະຝ່າຍທີ່ເໝາະສົມ.
   ເປັນຫຍັງພວກເຮົາຈຶ່ງຍອມຈຳນົນຕໍ່ພຣະເຈົ້າ ເມື່ອພວກເຮົາມີພຣະຄັມພີແລ້ວ? (2:1)
   ຄວາມບາບອັນໃດ ທີ່ເຫັນວ່າມະນຸດເຮັດຫລາຍກວ່າໝູ່? (2:1)
   ຄວາມບາບອັນໃດທີ່ມະນຸດເຮັດໜ້ອຍກວ່າໝູ່? (1:29-31)

6. ອ່ານ ໂຣມ 2:12-16 ແລ້ວຄຣູຈະອະທິບາຍຄວາມໝາຍແລ້ວກໍວາງຄຳຖາມຕາມທີ່ເໝາະສົມ.
   ພວກທີ່ບໍ່ມີພຣະບັນຍັດແມ່ນຫຍັງຈະຕັດສິນພວກເຂົາ?
   ພວກທີ່ມີພຣະບັນຍັດເດແມ່ນຫຍັງຈະຕັດສິນພວກເຂົາ?
   ເວລາໃດຈະມີການພິພາກສາຄວາມເລິກລັບຂອງມະນຸດ? (2:16)

<u>**ແນະນຳໜູນໃຈ:**</u>

7. ສົນທະນາກັນກ່ຽວກັບຂ່າວດີ ໃນເຈັ້ຽບົດຮຽນ ຂ່າວດີກໍເປັນຂ່າວດີຢູ່ແລ້ວ ແລະຍັງບໍ່ພໍທີ່ນັ້ນຍັງເປັນຂ່າວທີ່ທຸກຄົນຢາກໄດ້ຍິນໄດ້ຟັງ.

8. ໃຫ້ຄົນນຶ່ງອ່ານ ໂຣມ 1:16-17 ຊຶ່ງເປັນຂໍ້ພຣະຄັມພີຂອງອາທິດທີ່ຜ່ານມາ. ຖາມ: ເປັນຫຍັງຈຶ່ງວ່າຂ່າວດີ? ຂ່າວດີປະກອບດ້ວຍອັນໃດແດ່? ມີການໜູນໃຈອັນໃດແດ່? ຢ່າລືມວ່າ ຂ່າວດີນັ້ນຈະຕ້ອງໄດ້ຟັນຝ່າຄວາມບາບຕ່າງໆເຊັ່ນ: ອິດສາ, ເວົ້າຂວັນ, ນິນທາສັບສໍ່, ອວດອົ່ງທະນົງຕົວ ແລະຕັດສິນຜູ້ອື່ນ. ພວກທີ່ບໍ່ມີພຣະຄັມພີຈະໄດ້ຮັບຟັງຂ່າວດີ(ຂ່າວປະເສີດ)ໄດ້ຄືແນວໃດ?

9. ລອງນຳພານັກຮຽນວາງແຜນຈະແບ່ງປັນຂ່າວປະເສີດລອງເບິ່ງສຳລັບອາທິດນີ້. ຈະເປັນການແຈກໃບປິວ, ໃຫ້ຄຳພະຍານ, ສມັກໃຈເຮັດອາຫານລ້ຽງຄົນ, ຫລືອື່ນໆ ຈະແມ່ນໃນໂບດຫລືນອກໂບດກໍໄດ້.

10. ເປັນຫຍັງພວກເຮົາຈຶ່ງເຮັດດັ່ງນີ້ ? ພວກເຮົາຕ້ອງການໃຫ້ທຸກຄົນຮູ້ຈັກພຣະເຈົ້າ ທ່ານບໍ່ມີຂໍ້ແກ້ຕົວແລະບໍ່ມີ

ຂໍ້ຍົກເວັ້ນ. ອ່ານ 1:18-19; ຂ:1 ອ່ານດັ່ງໆກ່ອນຈະຈົບບົດຮຽນ.

11. ອະທິຖານ ຕຽມຕົວນະມັສການພຣະເຈົ້າ.

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 3
# ບໍ່ແມ່ນວ່າດີແລ້ວກໍພໍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 2:17-29

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຣມ 2:17-3:20

**ຈຸດສຳຄັນຂອງບົດຮຽນນີ້:** ຄວາມສັມພັນກັບພຣະເຈົ້າທີ່ຖືກຕ້ອງ ຈຳເປັນຕ້ອງມີຄວາມສັມພັນທາງໃຈທີ່ເໜືອກວ່າການກະທຳສາສນາກິດທາງເປືອກນອກ.

**ຄຳຖາມເພື່ອສຳຣວດ:** ທ່ານພໍຈະໃຈ້ແຍກໄດ້ບໍ່ວ່າ ສາສນາກິດ, ສາສນາຣູບນອກ, ສາສນາພິທີ ຫລື ປະຕິບັດດ້ວຍຄວາມສັມພັນກັບພຣະເຈົ້າຢ່າງແທ້ຈິງ.

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໃຈ້ແຍກໃຫ້ເຫັນວ່າ ແມ່ນວ່າຈະຊອກສແວງ ຫາພຣະເຈົ້າດ້ວຍວິທີໃດກໍແລ້ວແຕ່ທ່ານຈະບໍ່ພົບເດັດຂາດ ຫາກທ່ານບໍ່ມີຄວາມສັມພັນກັບພຣະເຈົ້າຢ່າງຖືກຕ້ອງເສັຽກ່ອນ

**ເນັ້ນໜັກເຖິງການສຶກສາແລະການກະທຳ**

- ຢັ້ງຢືນວ່າພຣະທັມຄັມພີມີອຳນາດໃນການນຳພາຊີວິດ ແລະການປ່າວປະກາດດ້ວຍ
- ເສີມຂຍາຍການຈະເຣີນເຕີບໂຕ, ເຄື່ອນໄຫວໃນຄວາມເຊື່ອ
- ແບ່ງປັນພຣະກິດຕິຄຸນແກ່ທຸກຄົນ
- ເຊື່ອຟັງແລະຮັບໃຊ້ອົງພຣະເຢຊູ ບໍ່ວ່າຈະເປັນທາງຮ່າງກາຍ, ທາງຈິດວິນຍານ ແລະທາງຄວາມຮູ້ສຶກ
- ເສີມສ້າງທຸກຄົນໃຫ້ກາຍເປັນຜູ້ນຳທີ່ໃຊ້ການໄດ້
- ທຸກຄົນເປັນພຣະສາຍາຂອງພຣະເຈົ້າ ມີຄຸນຄ່າເທົ່າທຽມກັນທຸກຄົນ

## ແຜນການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຢາຍເຈັ້ຽໃຫ້ທຸກໆຄົນ 8 ແບບຢ່າງເຫມືອນກັບສຳຣວດສິບຢ່າງຂອງເພື່ອນບ້ານທີ່ໃກ້ຊິດ ແລະຖາມພວກເຂົາເຈົ້າວ່າ: (1) ໄປໂບດເປັນປະຈຳ (2) ເຊື່ອໃນພຣະເຈົ້າ (3) ໄດ້ຮັບສິນບັບຕິສະມາແລ້ວ (4) ອະທິຖານເປັນປະຈຳ (5) ອ່ານພຣະຄັມພີຢູ່ບ້ານ (6) ຮັກສາພຣະບັນຍັດ 10 ປະການ (7) ຮ່ວມຮັບສິນມະຫາສະນິດ (8) ຖວາຍນຶ່ງສ່ວນສິບ ຫລືວ່າຖວາຍເປັນປະຈຳ

   ບັດນີ້ພວກເຮົາ ຫັນມາຫາຄົນທີ່ນັ່ງຂ້າງຕົວເຮົາ. ນ້ຳເບີໃດຈະເປັນນ້ຳເບີທີ່ສູງກວ່າຫມູ່? ຫລືວ່າທ່ານບໍ່ອາດຈະຄາດຄະເນໄດ້?

2. ຂຽນລົງໃນກະດານ : ສາສນາ, ສິນທັມ, ແລະສັມພັນ. ຂໍຄວາມທັງສາມຄວາມນີ້ ຂໍໃຫ້ທ່ານອະທິບາຍວ່າມີຄວາມແຕກຕ່າງກັນຢ່າງໃດ? ການສະແດງຕົວຢ່າງໃດທີ່ພວກເຮົາເຫັນວ່າເປັນຜູ້ນັບຖືສາສນາ ແຕ່ບໍ່ມີຄວາມສັມພັນກັບພຣະເຈົ້າ? (ໃຫ້ຄຣູອະທິບາຍ)

## ນຳພາການສຶກສາພຣະຄັມພີ

3. ໃຫ້ຕື່ມຄວາມເຫລົ່ານີ້ລົງໃນກະດານ: ໃຫ້ກຽດ, ຮັບຜິດຊອບ ແລະສອງໜ້າໃຫ້ຄົນນຶ່ງອ່ານ ໂຣມ 2:17-24 ເມື່ອທຸກຄົນໄດ້ຟັງແລ້ວໃຫ້ຄິດຮ່ວມກັນວ່າໂປໂລມີຄວາມໝາຍຢ່າງດທີ່ລາວຍົກຮູບພາບນີ້ຂຶ້ນມາ. ວາງຄຳຖາມເພື່ອຈະດຶງເອົາຄວາມຈິງອອກມາ.
   - ພວກຢິວເຄີຍໃຫ້ກຽດກັນແບບໃດ?
   - ແມ່ນຫຍັງຄືຄວາມຮັບຜິດຊອບຈະມາກັບການໃຫ້ກຽດ?
   - ໜ້າຊື່ໃຈຄົດຫລືວ່າເວົ້າຢ່າງນຶ່ງທຳຢ່າງນຶ່ງ ໂປໂລໃຫ້ຕົວຢ່າງຄົນພວກນີ້ຢ່າງໃດ?

## ຕິດຕາມຄຳຖາມພວກນີ້:

- ຄຣິສຕຽນຄວນຈະໃຫ້ກຽດຝ່າຍຈິດວິນຍານຢ່າງໃດ?
- ໜ້າທີ່ຮັບຜິດຊອບຂອງຄຣິສຕຽນຕໍ່ຊາວໂລກຢ່າງໃດ ເມື່ອເຮົາເຊື່ອພຣະເຢຊູຄຣິດແລ້ວ?
- ໜ້າໄຫວ້ຫລັງຫລອກແບບໃດ ທີ່ໂປໂລກ່າວເຖິງໃນໝູ່ຄຣິສຕຽນທຸກວັນນີ້?

4. ອ່ານໂຣມ 2:25-29 ໃຫ້ທຸກຄົນຕັ້ງໃຈຟັງ ກົດຣະບຽບຂອງພວກຢິວທີ່ຈະເຂົ້າມາຫາພຣະເຈົ້ານັ້ນຄືອັນໃດ? (ພິທີຕັດ) ຄຣູຈະອະທິບາຍວ່າ ພວກນີ້ເຂົາພາກັນເນັ້ນແຕ່ຂ້າງນອກ ແຕ່ຂ້າງໃນເຂົາຊໍ້າພັດປະລະເລີຍເສັຽ. ເຮົາຈະຮັກສາທ່າທີນີ້ໃຫ້ບໍຣິສຸດຄືແນວໃດ? ຫລືຈະມີການປ່ຽນແປງທາງໃນຄືແນວໃດ? ຄຣູຈະອະທິບາຍເພີ້ມເຕີມອີກຍິ່ງເປັນການດີ.

5. ເອີ້ນໃຫ້ອີກຄົນນຶ່ງອ່ານດັງໆ ໂຣມ 3:1-2, 9-10, 20 ຄຣູຈະບອກວ່າໃຫ້ສົມທຽບຄົນທີ່ເກີດເປັນຄົນຢິວ ແລະຄົນຕ່າງຊາດ
   - ການເກີດແລະເຊື້ອຊາດຈະພຽງພໍບໍ່ທີ່ຈະເປັນຄົນຊອບທັມຕໍ່ພຣະພັກພຣະເຈົ້າ?
   - ຄົນຢິວແລະຄົນຕ່າງຊາດເປັນຄົນທີ່ຮູ້ຈັກແລະໃຫ້ກຽດພຣະເຈົ້າ, ເຂົາຖືກສິດສອນ, ເຂົາມີພຣະຄຳຂອງພຣະເຈົ້າ
   - ຄົນຢິວແລະຄົນຕ່າງຊາດຄວນຈະຮັກສາກົດບັນຍັດຂອງພຣະເຈົ້າໃຫ້ຄົບຖ້ວນ.
   - ການຜິດພາດໃນການຮັກສາພຣະບັນຍັດ ສະແດງໃຫ້ເຫັນວ່າເຮົາຈຳເປັນຕ້ອງການການຊ່ວຍເຫລືອຈາກພຣະເຈົ້າ
   - ການກະທຳຕ່າງໆຂອງພວກເຮົາຈະເປັນການດີ ຖ້າພວກເຮົາຫາກມີຄວາມສັມພັນກັບພຣະ ເຈົ້າຢ່າງແທ້ຈິງ

**ໜູນໃຈໃຫ້ມີການກະທຳ:**

6. ຈົ່ງໃຊ້ເວລາມິດງຽບໜ້ອຍນຶ່ງ ແລ້ວຄຣູຈະນຳພານັກຮຽນໃຫ້ເຂົ້າຫາພຣະເຈົ້າ ໂດຍການວາງຄຳຖາມຕໍ່ໄປນີ້.
   - ໂດຍສ່ວນຕົວແລ້ວ ທ່ານຄິດວ່າເວລາໃດທີ່ທ່ານຕ້ອງການພຣະເຈົ້າຫລາຍທີ່ສຸດ?
   - ການກະທຳຕ່າງໆ ການນະມັສການ  ການອ່ານພຣະຄັມພີ  ພິທີສິນຣະນິກ ຈະໃຫ້ຄວາມໝາຍທີ່ສຳຄັນໃນການພົວພັນກັບພຣະບິດາຜູ້ຊົງສຖິດໃນສວັນຢ່າງໃດ?

7. ເຊີນທຸກຄົນທີ່ຍັງບໍ່ທັນໄດ້ເຊື້ອເຊີນເອົາພຣະເຢຊູເທື່ອ ໃຫ້ຮັບເອົາພຣະອົງມາເປັນພຣະຜູ້ຊ່ວຍໃຫ້ລອດ.
   ອະທິຖານເພື່ອຈະໄດ້ນະມັສການພຣະເຈົ້າ

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 4
# ນີ້ຄືສິ່ງທີ່ພວກເຮົາຈະແກ້ໄຂໄດ້

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 3:21-31

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຣມ 3:21-31

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າໄດ້ຊົງຈັດຕຽມເສັ້ນທາງຣອດໃຫ້ແກ່ພວກເຮົາທຸກໆຄົນຄືທາງຂອງພຣະເຢຊູຄຣິດໂດຍທາງຄວາມເຊື່ອ

**ຄຳຖາມເພື່ອສຳຣວດ:** ຄົນທັງຫລາຍຈະອອກຈາກສິ່ງບໍ່ດີທີ່ພວກເຂົາ, ພວກເຮົາ,ໄດ້ກະທຳມາຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໃຫ້ຄົນທັງຫລາຍໄດ້ພິຈາຣະນາວ່າ ຄວາມລອດພົ້ນເປັນມາຢ່າງໃດ ຫລືຢືນຢັນແລ້ວຢືນຢັນອີກວ່າພຣະເຢຊູຄຣິດໄດ້ທຳງານໃນຕົວເຮົາຢ່າງໃດ?

**ເນັ້ນໜັກເຖິງການສຶກສາແລະການກະທຳ**

- ຢັ້ງຢືນວ່າພຣະທັມຄັມພີມີອຳນາດໃນການນຳພາຊີວິດ ແລະ ການປ່າວປະກາດດ້ວຍ
- ເສີມຂຍາຍການຈະເຣີນເຕີບໂຕ, ເຄື່ອນໄຫວໃນຄວາມເຊື່ອ
- ໜູນໃຈຄອບຄົວຄຣິສຕຽນໃຫ້ມີສຸຂພາບດີ
- ທຸກຄົນທີ່ຖືກສ້າງຕາມພຣະລັກສະນະຂອງພຣະເຈົ້າມີຄຸນຄ່າເທົ່າທຽມກັນ

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ:

1. ໃຫ້ຕິດຮູບແຜນທີ່ເກົ່າໆ ແຜ່ນນຶ່ງ ແລ້ວຂຽນຢອງໃສ່ທາງເທິງວ່າ "ເສັ້ນທາງສູ່ຄວາມລອດພົ້ນ" ຖາມນັກຮຽນວ່າ "ແຜນທີ່ນີ້ພວກເຮົາໄດ້ມາຈາກໃສ? (ໄດ້ມາຈາກບໍຣິສັດປະກັນພັຍ ສາມເອ, ຈາກຢາຣູ) ຄຣູຈະອະທິບາຍວ່າພຣະເຈົ້າມີແຜນຢ່າງຈະແຈ້ງຊຶ່ງທຸກໆຄົນ ສາມາດໄດ້ຮັບການອະພັຍໂທດ ແລະໄດ້ຮັບຊີວິດໃໝ່. ອ່ານຈຸດສຳຄັນຂອງບົດຮຽນ ແລະຄຳຖາມເພື່ອສຳຣວດສຳລັບວັນນີ້.

### ນຳພາສຶກສາພຣະຄັມພີ

2. ອ່ານ ໂຣມ 3:20. ແລ້ວຂຽນຄຳວ່າ "ທາງສຸດ" "ຂ້ອຍສາມາດເຮັດໄດ້" "ສາສນາ" ໃຊ້ວັກທຳອິດຂອງບົດຮຽນ ໃນເຈັ້ຽບົດຮຽນເພື່ອທວນຄືນໃຫ້ເຫັນວ່າຄວາມລອດພົ້ນແມ່ນບໍ່ໄດ້ມາໂດຍການກະທຳຂອງຕົນເອງ.

3. ອ່ານ ໂຣມ 3:21- 22 ສຳລັບຫ້ອງຮຽນ. ຫົວຂໍ້ນີ້ຂຶ້ນຕົ້ນດ້ວຍຄຳວ່າ "ແຕ່ບັດນີ້" ກໍໝາຍຄວາມວ່າແຕ່ຜ່ານມາຈະເປັນຢ່າງໃດກໍແລ້ວແຕ່. ເວລານີ້ ດຽວນີ້ ບັດນີ້ ແມ່ນຄຳນຶ່ງທີ່ປ່ຽນຈາກທາງນຶ່ງໄປຫາ

ອີກທາງນຶ່ງ ດຽວນີ້ພວກເຮົາໄດ້ເຫັນແຜນການຂອງພຣະເຈົ້າ ແລ້ວວ່າພຣະອົງມີແຜນການຕໍ່ທຸກໆຄົນ. "ທາງສູ່ຄວາມລອດພົ້ນ" ການໄຖ່ຖອນໄດ້ປາກົດຂຶ້ນມາແລ້ວ ທາງແຫ່ງຄວາມລອດພົ້ນໄດ້ສຳແດງອອກມາແລ້ວ.

4. ຖາມນັກຮຽນວ່າ ໃຜເຄີຍຮູ້ຈັກບໍ່ເສັ້ນທາງແຫ່ງຄວາມລອດທີ່ກ່າວມານີ້ແມ່ນຫຍັງ? ໃຫ້ໂອກາດແກ່ນັກຮຽນໃຫ້ພວກເຂົາຄິດແລະຕອບ. ໃຫ້ຂຽນຂໍ້ພຣະຄັມພີລົງໃນກະດານ ໂຣມ 3:23 ; ໂຣມ 6:23 ; ໂຣມ 5:8 ; ໂຣມ 10:9-10 ; ໂຣມ 10:13 ຫລາຍຄົນກໍເຄີຍໄດ້ຜ່ານເສັ້ນທາງນີ້ມາຫາຄວາມລອດ. ຖ້າເປັນໄປໄດ້ໃຫ້ຄຣູຂຽນ ຫລືພິມໃສ່ເຈັ້ຍນ້ອຍໆນຶ່ງ ເພື່ອນັກຮຽນຈະໄດ້ໃຊ້ໃນພາຍຂ້າງໜ້າ.

**ນຳພານັກຮຽນໃຫ້ເຂົ້າໃຈແຕ່ລະຂໍ້ ເລີ້ມຕົ້ນດ້ວຍ:**

| | |
|---|---|
| ໂຣມ 3:23 | "ທຸກຄົນເປັນຄົນບາບ" |
| ໂຣມ 6:23 | "ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍ" |
| ໂຣມ 5:8 | " ພຣະເຈົ້າຊົງມີຄວາມຮັກ ພຣະອົງຊົງຕາຍແທນພວກເຮົາ" |
| ໂຣມ 10: 9-10 | " ເຮົາຕ້ອງຮັບດ້ວຍປາກແລະເຊື່ອດ້ວຍໃຈ ວ່າພຣະອົງຊົງເປັນພຣະເຈົ້າ ທີ່ຟື້ນຂຶ້ນມາຈາກຄວາມຕາຍ" |
| ໂຣມ 10 :13 | " ທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າກໍຈະພົ້ນ" |

5. ໃຫ້ຫັນກັບມາຫາບົດຮຽນຂອງວັນນີ້ອີກ ໂຣມ 3:25-26 ຊຶ່ງຈະອະທິບາຍເຖິງ "ພຣະຄຸນ" ແລະ "ຄວາມເມດຕາກະຣຸນາ" ອະທິບາຍໃນເຈັ້ຽບົດຮຽນ

## <u>ຄຳໜູນໃຈສຳລັບວັນນີ້:</u>

6. ເອີ້ນຄົນນຶ່ງອ່ານພຣະຄັມພີ 3: 27-31 ແລ້ວຖາມຄຳຖາມທີ 3 ໃນເຈັ້ຽບົດຮຽນ "ໃນເມື່ອພວກເຮົາຮູ້ວ່າທຸກຄົນເປັນຄົນບາບແລະທາງລອດກໍແມ່ນທາງດຽວກັນແລະວິທີດຽວກັນທັງໝົດ ພວກເຮົາຈະແນະນຳພວກທີ່ຈຳແນກເຊື້ອຊາດ, ຈຳແນກຜິວ, ຈຳແນກຊັ້ນວັນນະ, ຈຳແນກເພດໄດ້ຄືແນວໃດ? (ທຸກຄົນແມ່ນເຊື້ອເຊີນໃຫ້ເຂົາເຂົ້າມາເຊື່ອ ແລະຮັບເອົາຄວາມລອດພົ້ນຈາກພຣະເຢຊູຄຣິດເຈົ້າຂອງພວກເຮົາ)

7. ກ່ອນຈະອອກຈາກຫ້ອງຮຽນໃຫ້ຄຣູຕຽມຂອງຂວັນນ້ອຍໆ ບໍ່ວ່າຈະເປັນສໍດຳຫລືວ່າເງິນນຶກໂກ້ ຫລືອັນໃດກໍໄດ້. ວາງໄວ້ໜ້າໂຕະແລ້ວເອີ້ນໃຫ້ຄົນມາເອົາ. ລໍຖ້າ. ເມື່ອມີຄົນນຶ່ງກ້າວຂາອອກມາເອົາແລ້ວໃຫ້ເຂົາເປີດຢູ່ຕໍ່ໜ້າທຸກຄົນ. ແລ້ວຄຣູກໍຈະສລູບບົດຮຽນດ້ວຍການຮັບເອົາອົງພຣະເຢຊູຄຣິດ. ພວກເຮົາຕ້ອງກ້າວອອກມາແລະຮັບເອົາແລ້ວຈຶ່ງຈະໄດ້.

8. ເຊີນທຸກຄົນໃນຫ້ອງອະທິຖານງຽບໆ ຫລັງຈາກນັ້ນຄຣູກໍນຳພາອະທິຖານປິດ ຕຽມຕົວເຂົ້ານະມັສການ

*ສຈ. ດຣ. ບຸນໂຣມ ພົມມະຈັນ*

# <u>ແນະນຳຄູສອນ</u>
# <u>ບົດຮຽນທີ 5</u>
# <u>ຄວາມເຊື່ອເປັນທາງຖືກຕ້ອງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ໂຣມ 4:1-17, 23-25

**<u>ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:</u>** ໂຣມ 4

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ການທີ່ພຣະເຈົ້າໄດ້ກະທຳຕໍ່ອັບຣາຮາມໄດ້ບອກເຮົາທຸກຄົນວ່າ ການມີຄວາມສັມພັນກັບພຣະເຈົ້ານັ້ນຕ້ອງຂຶ້ນກັບຄວາມເຊື່ອ.

**<u>ຄຳຖາມເພື່ອການສຳຣວດ:</u>** ແມ່ນຫຍັງເປັນຄວາມເຊື່ອ-ບໍ່ແມ່ນທຳນຽມທາງດ້ານສາສນາ ແລະຂໍ້ຜູກມັດເປັນສິ່ງສຳຄັນ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະສລູບຄວາມຄິດຂອງອາຈານໂປໂລເຖິງຄວາມເຊື່ອຂອງອັບຣາຮາມ ແລະເອົາມາປະກອບໃນຊີວິດຂອງຕົນເອງ.

**<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ເໜັ້ນໜັກວ່າພຣະຄັມພີມີອຳນາດນຳພາໃນການດຳລົງຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດແກ່ຄົນທົ່ວໄປ
- ເພື່ອເສີມສ້າງໃຫ້ຈະເຣີນ, ໃຫ້ມີຄວາມເຊື່ອມີຊີວິດຊີວາ.

## <u>ບົດນຳອະທິບາຍພຣະຄຳພີ</u>

## <u>ການເຂົ້າໃຈໃນເນື້ອເຣື່ອງ</u>

ເໝືອນດັ່ງລູກສິດກັບຄຣູ, ອາຈານໂປໂລໄດ້ພະຍາຍາມຊັກຊວນໃຫ້ຜູ້ອ່ານຮູ້ແນ່ໃຈວ່າ ການທີ່ໄດ້ຮັບຄວາມພົ້ນນັ້ນບໍ່ແມ່ນຂຶ້ນກັບການຮັກສາພຣະບັດຍັດ ແຕ່ໂດຍຄວາມເຊື່ອ. ບາງຄັ້ງ ເພິ່ນຍັງຖາມວ່າ, "ມີພາກສ່ວນໃດເວົ້າເຖິງຄວາມພົ້ນທີ່ບໍ່ແມ່ນການປະຕິບັດນັ້ນ" ທ່ານຍັງບໍ່ເຂົ້າໃຈ?

ອາຈານໂປໂລໄດ້ເຮັດເໝືອນຄຣູສອນທີ່ດີ ເພື່ອຈະນຳຄວາມເຂົ້າໃຈມາເຖິງຜູ້ອ່ານຄື (1) ໃຊ້ບົດປະກອບ (2) ຊອກເອົາບ່ອນຄົນອື່ນໄດ້ອ້າງເຖິງທີ່ມີພະລັງ. ດັ່ງນັ້ນ, ເພິ່ນຈຶ່ງຍົກເອົາຕົວປະກອບເຣື່ອງອັບຣາຮາມຂຶ້ນມາເພື່ອປະກອບກັບຄຳສອນຂອງຕົວເອງ.

## ການແປພຣະຄັມພີ

ເປັນຄົນຊອບທັມໂດຍຄວາມເຊື່ອ-ການແກ້ໄຂໃຫ້ຖືກຕ້ອງ (4:1-15)

ໃນຕອນນີ້ອາຈານໂປໂລໄດ້ໃຊ້ແບບຄຳຖາມ ແລະຄຳຕອບ:
(1) ອັບຣາຮາມໄດ້ກາຍເປັນຄົນຊອບທັມໂດຍຄວາມເຊື່ອ ຫລືການປະຕິບັດ? (4-8)
(2) ພຣະເຈົ້າໄດ້ປະກາດການເປັນຄົນຊອບທັມຂອງອັບຣາຮາມກ່ອນ ຫລືຫລັງຈາກຮັບພິທີຕັດ? 4:10-11)
(3) ຄວາມຊອບທັມນັ້ນໄດ້ມີສຳລັບຄົນທີ່ຮັບພິທີຕັດເທົ່ານັ້ນບໍ່? (4:11-12)
(4) ພຣະສັນຍາຂອງພຣະເຈົ້າໄດ້ເຂົ້າມາໂດຍທາງກົດບັນຍັດ ຫລືໂດຍທາງຄວາມເຊື່ອ? (4:12-15)

ຄວາມຊອບທັມໂດຍຄວາມເຊື່ອ-ຄຳສະລູບ (4:16-25)

4:16-22, ແມ່ນຫຍັງເປັນຄວາມເຊື່ອຂອງອັບຣາຮາມ?

- ໃຫ້ອ່ານຫລາຍໆເທື່ອຈາກປື້ມພຣະຄັມພີເພື່ອຄວາມເຂົ້າໃຈ.
- ໃຫ້ອ່ານບົດຮຽນທີ່ເປັນຄູ່ກັບຄຳແນະນຳນີ້ເພື່ອຈະຮູ້ວ່າ ສະມາຊິກໃນຫ້ອງຮຽນອ່ານຫຍັງແດ່.
- ຖ້າມີປື້ມອະທິບາຍພຣະຄຳພີເພີ້ມ ຂໍໃຫ້ອ່ານເພື່ອຈະໄດ້ມີຄວາມເຂົ້າໃຈເພີ້ມ. 4:23-25, ຄວາມເຊື່ອເທົ່ານັ້ນເປັນທາງນຳໄປເຖິງຄວາມລອດພົ້ນ?
- ໃຫ້ອ່ານຫລາຍໆເທື່ອຈາກປື້ມພຣະຄັມພີເພື່ອຄວາມເຂົ້າໃຈ.
- ໃຫ້ອ່ານບົດຮຽນທີ່ເປັນຄູ່ກັບຄຳແນະນຳນີ້ເພື່ອຈະຮູ້ວ່າ ສະມາຊິກໃນຫ້ອງຮຽນອ່ານຫຍັງແດ່. ເອົາໃຈໃສ່ເຖິງຄວາມໝາຍ

"ຄວາມເຊື່ອໂດຍບໍ່ມີການປະຕິບັດກໍຕາຍແລ້ວ" (ຢາກບ 2:17). ມັນເປັນບັນຫາບໍ່ທີ່ອາຈານໂປໂລເວົ້າເຖິງຄວາມເຊື່ອ ແລະການປະຕິບັດ ຖ້າຈະເອົາມາທຽບກັນກັບສິ່ງທີ່ຢາໂກໂບໄດ້ເວົ້າ? ຢາໂກໂບໄດ້ຂຽນຂຶ້ນເພື່ອສອນຄົນທີ່ໄດ້ຮັບຄວາມພົ້ນແລ້ວ ແລະບໍ່ໄດ້ເປັນຫ່ວງເຖິງການດຳລົງຊີວິດໃຫ້ສົມກັບຄວາມເຊື່ອຂອງຕົນໃນພຣະຄຣິດ. ດັ່ງນັ້ນ, ຢາໂກໂບຈຶ່ງກ່າວວ່າຄວາມຈິງໃນການເຊື່ອຕ້ອງເກີດຜົນດີດ້ວຍການກະທຳ, ຖ້າບໍ່ມີສິ່ງດີເກີດຂຶ້ນກໍໝາຍເຖິງຄວາມເຊື່ອຂອງຄົນນັ້ນປອມ-ບໍ່ແມ່ນຄວາມເຊື່ອເລີຍ. "ຖ້າຜູ້ໃດຄິດວ່າຕົນເອງເປັນຄົນທັມມະແລະບໍ່ໄດ້ຫ້າມລີ້ນຕົນເອງ ແຕ່ລໍ້ຫລອກຕົນເອງ ທັມມະຂອງຄົນນັ້ນກໍບໍ່ມີປໂຍດ." (ຢາກບ 1:26) ການກະທເປັນເຫດຜົນຂອງຄວາມເຊື່ອທີ່ແທ້ຈິງ.

<u>ແຜນການສອນ</u>

**ກິຈການແຜນການສອນ**
ພະຍາຍາມໃຊ້ໃຫ້ຖືກກັບຊີວິດປະຈຳວັນ-ໃຫ້ມີລາຍການຮຽນຕ່າງໆ:
1. ຂຽນສິ່ງທີ່ຕ້ອງການແລະຈົດໃສ່ກະດານ ຫລືເຈັ້ຽ:

- ໄປວິຫານ
- ເປັນຄົນສຸພາບກັບຄົນອື່ນ
- ໃຫ້ທານແກ່ຄົນທຸກຍາກ
- ເຊື່ອຟັງອົງພຣະເຢຊູ

**<u>ນຳພາໃນການສຶກສາ</u>**

໒. ວັນນີ້ໄດ້ເວົ້າເຖິງການກະທຳຂອງອັບຣາຮາມ, ໃຫ້ແບ່ງເປັນ 4 ກຸ່ມເພື່ອຄົ້ນຄວ້າໃຫ້ລະອຽດ

- ກຸ່ມ 1: ໃຫ້ເວົ້າເຖິງຄວາມດີທີ່ອັບຣາຮາມໄດ້ເຮັດຕໍ່ຫລານຊາຍ ທ່ານໂລດ. (ປຖມ 13:5-11)
- ກຸ່ມ ໒: ໃຫ້ເວົ້າເຖິງການຖວາຍຂອງອັບຣາຮາມຕໍ່ເຈົ້າຊີວິດເມືອງເຢຣູຊາເລັມ (ປຖມ 14%11-໒0)
- ກຸ່ມ 3: ໃຫ້ເວົ້າເຖິງການຖວາຍຄັ້ງຍິ່ງໃຫຍ່ (ປຖມ ໒໒:1-14)
- ກຸ່ມ 4: ໃຫ້ຊອກຫາການກະທຳ ໒ ຢ່າງຂອງອັບຣາຮາມມີຄວາມເຊື່ອຜິດປົກກະຕິ (ເຮັບເຣີ 11:8-1໒).

**<u>ສລູບ:</u>**

- ເອີ້ນເອົາຜູ້ສມັກເວົ້າຄຳພະຍານສ່ວນຕົວເຖິງຄວາມເຊື່ອທີ່ພຣະເຈົ້າອວຍພຣະພອນ.
- ຊອກເອົາເຣື່ອງຈາກປື້ມ, ໜັງສືພິມ, ຫລືຂ່າວໃໝ່ໆມາເວົ້າເຖິງຄວາມເຊື່ອທີ່ມີການປະຕິດບັດ.

*ສຈ. ດຣ. ບຸນ ວົງສຸຣິດທ໌*

# <u>ແນະນຳຄູສອນ</u>
# <u>ບົດຮຽນທີ 6</u>
# <u>ເປັນຊີວິດທີ່ດີເລີດ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ໂຣມ 5:1-11

**<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u>** ໂຣມ 5

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ເພາະດ້ວຍການທີ່ອົງພຣະຜູ້ເປັນເຈົ້າໄດ້ກະທຳຕໍ່ພວກເຮົາໃນພຣະຄຣິດ ພຣະອົງຈຶ່ງປະທານໃຫ້ເປັນຄົນຊອບທັມດ້ວຍຄວາມເຊື່ອ, ແລະພວກເຮົາສາມາດມີຊີວິດທີ່ດີເລີດໄດ້.

**<u>ຄຳຖາມເພື່ອການສຳຣວດ:</u>** ຄວາມເຊື່ອໃນພຣະຄຣິສເຈົ້າຈະນຳພາໃຫ້ມີຊີວິດຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະຮູ້ຈັກຜົນກຳໄລໃນການໄວ້ວາງໃຈໃນພຣະຄຣິດແລະເຂົ້າໃຈເຖິງປະສົບການທີ່ໄດ້ຮັບພຣະພອນ.

**<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ບອກເຖິງອຳນາດຂອງພຣະຄັມພີທີ່ໃຊ້ແນະນຳໃນຊີວິດ ແລະການການຮັບໃຊ້.
- ແບ່ງປັນຂ່າວປະເສີດແກ່ຄົນທົ່ວໄປ
- ເພື່ອເສີມສ້າງໃຫ້ຈະເຣີນ, ໃຫ້ມີຄວາມເຊື່ອມີຊີວິດຊີວາ.

## <u>ບົດນຳອະທິບາຍພຣະຄັມພີ</u>

## <u>ການເຂົ້າໃຈໃນເນື້ອເຣື່ອງ</u>

ນ່ວຍທີນຶ່ງເວົ້າເຖິງ "ຈັດຫາທາງອອກໃຫ້," ຈາກປຶ້ມໂຣມ ບົດ 1-4, ເວົ້າເຖິງແຜ່ນການຂອງພຣະເຈົ້າປະທານຄວາມລອດພົ້ນໃຫ້ ແລະພັຍວິບັດໃນການສູນເສັຽທີ່ມະນຸດຈຳເປັນຕ້ອງໄປປະເຊີນ. ນ່ວຍທີສອງເວົ້າເຖິງ "ປະທານສິ່ງດີສຸດຍອດໃນຊີວິດ," ແມ່ນຢູ່ໃນບົດທີ 5-8. ໃນບົດເຫລົ່ານີ້ ທ່ານອາຈານໂປໂລໄດ້ປ່ຽນທິດທາງເພື່ອເວົ້າເຖິງສິ່ງຕອບສນອງ ແລະຜົນກຳໄລໄດ້ຮັບຈາກແຜນການຂອງພຣະເຈົ້າ. ແມ່ນຫຍັງໄດ້ເກີດຂຶ້ນກັບຜູ້ຍອມຮັບເອົາຂອງພຣະຣາຊທານຈາກພຣະເຈົ້າໂດຍຄວາມເຊື່ອຄືຄວາມລອດພົ້ນນັ້ນ? ບົດຮຽນອັນທຳອິດໃນນ່ວຍທີສອງນີ້ບອກໃຫ້ຮູ້ຄຳຕອບສອງຢ່າງ: " ນັ້ນແມ່ນຊີວິດທີ່ດີເລີດ."

ຄຳເວົ້າ "ເຫດສັນນັ້ນ" ໃນບົດ 5:1 ໄດ້ສັນຍານບອກເຖິງການປ່ຽນແປງພາຍໃນຄວາມຄິດຂອງອາຈານໂປໂລ. ທຸກໆຄັ້ງທີ່ທ່ານໄດ້ເຫັນຄຳເວົ້າ "ເຫດສັນນັ້ນ" ທ່ານຄວນຕັ້ງຄຳຖາມຂຶ້ນວ່າ, ແມ່ນຫຍັງເປັນເຫດສັນນັ້ນ? ມັນໝາຍເຖິງ<u>ເຫດຜົນ ຫລືຜົນສະທ້ອນທີ່ຕາມມາ</u>. ຕອນນີ້ເພິ່ນໄດ້ທວນກັບຄືນໄປເວົ້າສິ່ງທີ່ໄດ້ເວົ້າມາແລ້ວເຖິງແຜນການອັນທ່ຽງທັມຂອງພຣະເຈົ້າ ແລະໄດ້ເວົ້າໄປເຖິງເຣື່ອງໃໝ່. ໃນຂໍ້ເຫລົ່ານີ້ ອາຈານໂປໂລໄດ້ເຄີຍເວົ້າເຖິງ, <u>ພຣະເຈົ້າປະທານຫົນທາງແຫ່ງຄວາມພົ້ນໂດຍພຣະຄຸນຕໍ່ຄົນຜິດບາບ, ຜົນທີ່ຕາມມາຄື ທຸກຄົນຜູ້ທີ່ຮັບເອົາກໍຈະໄດ້ປໂຍດ</u>

ຢ່າງມະຫາສານ. ຄວາມຈິງແລ້ວ ອາຈານໂປໂລໄດ້ໃຊ້ປໂຍດ, "ພວກເຮົາກາຍເປັນຄົນສິນທັມໂດຍຄວາມເຊື່ອ," ແມ່ນສິ່ງສລູບໃນບົດທີ 1-4. ໃນບົດທີ 5 ພວກເຮົາພາກັນຄົ້ນຫາຜົນປໂຍດທີ່ຕາມມາຂອງການເປັນຄົນຊອບທັມ.

ເວລາມີສິ່ງດີເກີດຂຶ້ນຕໍ່ພວກເຮົາ-ຂຶ້ນຊັ້ນ, ໄດ້ເງິນເດືອນຂຶ້ນ, ດີພະຍາດ, ໄດ້ຮັບມໍຣະດົກ ແລະອື່ນໆ ພວກເຮົາພາກັນວາດພາບວ່າມັນຊ່ວຍໃຫ້ການດໍາລົງຊີວິດປະຈໍາວັນດີຂຶ້ນ. ນັ້ນແຫລະເປັນສິ່ງທີ່ອາຈານໂປໂລຢາກໃຫ້ຄຣິສຕຽນໃນກຸງໂຣມໄດ້ປະສົບການ. ນັ້ນເປັນຊີວິດດີແລະເປັນກຽດໃນຊີວິດທີ່ເຂົາໄດ້ມີຄວາມສໍາພັນອັນດີກັບພຣະເຈົ້າໂດຍທາງພຣະເຢຊູຄຣິດ.

ການທີ່ໃຊ້ຄໍາ "ພວກເຮົາ" ອາຈານໂປໂລໄດ້ຮ່ວມເອົາຕົວເອງເຂົ້າໄປປະກອບສ່ວນໃນການຮັບຜົນກໍາໄລທີ່ໄດ້ມີຊີວິດຄຣິສຕຽນອັນປະເສີດ. ໃນຈົດໝາຍນີ້ ອາຈານໂປໂລໄດ້ໃຊ້ຄວາມພະຍາຍາມຂອງເພິ່ນທີ່ຈະເຮັດຕາມກົດບັນຍັດເພື່ອຈະໄດ້ຮັບຄວາມລອດພົ້ນ ແຕ່ເຫັນວ່າໄດ້ຮັບຄວາມຜິດຫວັງເທົ່ານັ້ນ. (ໂຣມ 7:24). ແຕ່ຕໍ່ມາວັນນຶ່ງເວລາເດີນທາງໄປດາມາເຊ ເພື່ອໄປຂົ່ມເຫງຄຣິສຕຽນ ເພິ່ນໄດ້ພົບກັບພຣະເຢຊູແລະຍອມຕໍ່ພຣະອົງ ແລະກໍໄດ້ພົບກັບຄວາມຊອບທັມ, ການປອງດອງ, ແລະໄດ້ຮັບການອະພັຍຍະໂທດໃຫ້. ດັ່ງນັ້ນ, ເພິ່ນຈຶ່ງໄດ້ຂຽນເຖິງເຣື່ອງຄວາມຊອບທັມຢ່າງຄ່ອງແຄ້ວດີ ໃນໂຣມ ບົດ 1-4. ໃນເມື່ອປະສົບກັບຊີວິດທີ່ໄດ້ມີການປ່ຽນແປງກັບອົງພຣະເຢຊູແລ້ວ ອາຈານໂປໂລຈຶ່ງມີຄວາມເວົ້າທີ່ມັກໃຊ້ເປັນປະຈໍາຄື: "ເຫດສັນນັ້ນ ການລົງໂທດຈຶ່ງບໍ່ມີແກ່ຄົນທັງຫລາຍທີ່ຢູ່ ໃນພຣະຄຣິດ" (ໂຣມ 8:1). ການທີ່ອາຈານໂປໂລໄດ້ອະທິບາຍເຖິງເຣື່ອງຜົນກໍາໄລ ແລະພຣະພອນທີ່ໄດ້ຈາກຊີວິດ ໃໝ່ນັ້ນກໍມາຈາກປະສົບການທີ່ເພິ່ນໄດ້ຮັບເປັນທາງສ່ວນຕົວ. ຂໍ້ພຣະຄໍາໃນບົດ 5 ເປັນເຣື່ອງວິດງານ ແລະສໍາຄັນໃນຈົດໝາຍທີ່ເພິ່ນໄດ້ຂຽນຂຶ້ນ.

## ການແປພຣະຄັມພີ

ສິ່ງນຶ່ງທີ່ຈະຊ່ອຍໃນການສຶກສາເຖິງຈຸດສໍາຄັນຄືໃຫ້ແບ່ງເປັນສອງພາກສ່ວນ: (1) ແມ່ນຫຍັງເປັນຜົນກໍາໄລໃນຊີວິດອັນປະເສີດທີ່ເຮົາໄດ້ຮັບດຽວນີ້? (2) ຊີວິດອັນປະເສີດນີ້ໄດ້ເປັນໄປໄດ້ຢ່າງໃດ?

### 1. ແມ່ນຫຍັງເປັນຜົນກໍາໄລໃນຊີວິດອັນປະເສີດທີ່ເຮົາໄດ້ຮັບດຽວນີ້?

5:1. ພວກເຮົາມີສັນຕິສຸກກັບພຣະເຈົ້າ. ຄໍາເວົ້າ "ສັນຕິສຸກ" ສາມາດເປັນທາງລົບ ແລະທາງບວກໄດ້. ທາງລົບຄືບໍ່ມີສົງຄາມ ຫລືການກຽດຊັງກັນຂຶ້ນ. ໃນເມື່ອພວກເຮົາໄດ້ປອງດອງກັບພຣະເຈົ້າ ການຜິດຖຽງກັນແລະສົງຄາມພາຍໃນໄດ້ຢຸດຕິລົງ. ແຕ່ມັນຍັງເປັນທາງບວກໃນສັນຕິສຸກ. ດັ່ງນັ້ນ, ຄຣິສຕຽນຈຶ່ງມີຄວາມຍິນດີທີ່ມີ "ສັນຕິສຸກ ກັບພຣະເຈົ້າ."

ໃຫ້ຫວນຍ້ອນຄືນຫລັງເຖິງຄໍາສອນຂອງພຣະເຢຊູ ທີ່ພຣະອົງກ່າວວ່າ, "ເຮົາມອບຄວາມສງົບສຸກໄວ້ກັບທ່ານທັງຫລາຍຄວາມສງົບສຸກຂອງເຮົາ ເຮົາປະທານໃຫ້ແກ່ທ່ານທັງຫລາຍບໍ່ເໝືອນໂລກໃຫ້ນັ້ນ ຢ່າໃຫ້ໃຈຂອງພວກທ່ານຫວຸ້ນວາຍໄປແລະຢ່າຊູ່ຢ້ານ." (ໂຢຮັນ 14:27) ໃນເມື່ອພຣະເຢຊູໄດ້ເວົ້າກັບຍິງໂສເພນີຜູ້ເອົານໍ້າຕາຫົດພຣະບາດພຣະອົງ, ພຣະເຢຊູໄດ້ໃຊ້ຄໍາເວົ້າ "ສັນຕິສຸກ" ແທນຂອງການໄດ້ຮັບຄວາມລອດພົ້ນ, "ຄວາມເຊື່ອຂອງທ່ານໄດ້ຊ່ອຍທ່ານ, ຈົ່ງໄປຢ່າງສັນຕິສຸດເທີ້ນ." (ລູກາ 7:50).

5:2ກ. (2) ພວກເຮົາມີທາງເຂົ້າໄປຫາພຣະຄຸນຂອງພຣະເຈົ້າ. "ທາງ" ນີ້ໄດ້ບອກເຖິງປະຕູໄດ້ເປີດໃຫ້ເຮົາເຂົ້າໄປຫາຜູ້ມີກຽດສູງ. ຕົວຢ່າງ, ພວກເຮົາມີທາງເຂົ້າໄປຫາປະທານາທິບໍດີຂອງສະຫະຣັດອະເມຣິກາ. ເຊັ່ນດຽວກັນໂດຍຜ່ານທາງພຣະຄຣິດ ຜູ້ທີ່ເຊື່ອມີທາງເຂົ້າຕົງໄປຫາພຣະເຈົ້າໄດ້.

ພຣະຄັມພີຕອນນີ້ໄດ້ເວົ້າເຖິງພວກເຮົາມີທາງເຂົ້າໄປເຖິງ "ພຣະຄຸນ" ຂອງພຣະເຈົ້າ ທີ່ພວກເຮົາສາມາດຢືນຢູ່ຕໍ່ພຣະພັກຂອງພຣະເຈົ້າໄດ້-ບໍ່ແມ່ນພຣະຄຸນທີ່ຊ່ອຍໃຫ້ເຮົາໄດ້ຮັບຄວາມພົ້ນເທົ່ານັ້ນ ແຕ່ແມ່ນພຣະຄຸນທີ່ຊ່ອຍເຫລືອເຮົາໃຫ້ດຳຣົງຊີວິດກັບສິ່ງແວດລ້ອມໄດ້. ທຸກວັນນີ້ ພວກເຮົາຢູ່ໃຕ້ພຣະຄຸນບໍ່ແມ່ນໃຕ້ກົດບັນຍັດ. (ໂຣມ 6:14-15).

5.2ຂ (3) <u>ພວກເຮົາມີຄວາມຫວັງທີ່ຈະໄດ້ເຂົ້າຮ່ວມກັບຣັສມີຂອງພຣະເຈົ້າຕລອດໄປ</u>. ຄຳເວົ້າໃນພາສາອັງກິດວ່າ "ຄວາມຫວັງ" ບອກເຖິງສະພາບບໍ່ແນ່ນອນ. ໃນເມື່ອພວກເຮົາເວົ້າວ່າ <u>ຂ້ອຍຫວັງດັ່ງນັ້ນ</u>, ມີຄວາມໝາຍວ່າ, ຂ້ອຍເອົາມີຈັບກັນໄວ້ ຫລືຂ້ອຍກຳລັງເຄາະທີ່ໄມ້ ເປັນຄຳເຕືອນໃນພາສາອັງກິດວ່າມີຄວາມຫວັງຂຶ້ນມາ. ແຕ່ໃນພຣະຄັມພີຄຳເວົ້າ "ຫວັງວ່າ" ເປັນສິ່ງແນ່ນອນ, ແນ່ໃຈທີ່ຂຶ້ນກັບພຣະສັນຍາຂອງພຣະເຈົ້າ. ນັກສາສນາສາດໄດ້ໃຊ້ຄຳເວົ້າຫວັງວ່າບອກເຖິງຊີວິດອັນຕລອດໄປເປັນນິດໃນພຣະຄຣິດ. ອາຈານ ໂປໂລໄດ້ຮ້ອງຄວາມຫວັງນັ້ນວ່າ "ຄວາມສຸກທີ່ສົມກັບຄວາມຫວັງ" ຄືການສ່ອງມາປາກົດອັນຮຸ່ງເຮືອງຂອງພຣະເຈົ້າອົງຍິ່ງໃຫຍ່ ຄືພຣະເຢຊູຄຣິດຜູ້ໂຜດໃຫ້ພົ້ນຂອງເຮົາທັງຫລາຍ. (ຕິໂຕ 2:13).

5:5. (4) <u>ພວກເຮົາໄດ້ມີຄວາມຮັກຂອງພຣະເຈົ້າໃນຈິດໃຈ.</u> ໝາຍເຖິງພຣະເຈົ້າໄດ້ຖອກເທຄວາມຮັກອັນອຳມະຕະຂອງພຣະອົງໃສ່ໃນໃຈຂອງພວກເຮົາ. ກະສັດດາວິດ ບໍ່ໄດ້ເປັນນັກວິທະຍາສາດ ແຕ່ເພິ່ນໄດ້ຮູ້ຈັກຄວາມຮັກອັນຍິ່ງໃຫຍ່ຂອງພຣະເຈົ້າ. ເພິ່ນໄດ້ກ່າວວ່າຄວາມຮັກຂອງພຣະເຈົ້າ "ສູງກວ່າຟ້າສວັນ" (ພສສ 57:10). ໂຢຮັນໄດ້ອະທິບາຍວ່າ "ພຣະບິດາຊົງໂຜດປະທານຄວາມຮັກແກ່ເຮົາທັງຫລາຍເປັນຢ່າງໃດ...!" (1 ໂຢຮັນ 3:1).

5:5ຂ (5) <u>ພວກເຮົາມີອົງພຣະວິນຍາບໍຣິສຸດຢູ່ໃນຊີວິດ.</u> ໃນເມື່ອເຮົາໄດ້ຮັບຄວາມພົ້ນແລ້ວ, ພຣະເຈົ້າປະທານອົງພຣະວິນຍານເຂົ້າມາສະຖິດໃນຊີວິດ. "ເຈົ້າທັງຫລາຍບໍ່ຮູ້ຫລືວ່າພວກເຈົ້າເປັນພຣະວິຫານຂອງພຣະເຈົ້າ ແລະພຣະວິນຍານບໍຣິສຸດຂອງພຣະເຈົ້າຊົງສະຖິດຢູ່ໃນພວກເຈົ້າ?"

5:2-3, 11. (6) <u>ພວກເຮົາສາມາດອວດເຖິງຄວາມສຳພັນໃໝ່ກັບພຣະເຈົ້າ.</u> ໃນໂຣມ 4:2 ເຮົາໄດ້ຮູ້ວ່າ ອັບຣາຮາມບໍ່ສາມາດອວດຕໍ່ພຣະພັກຂອງພຣະເຈົ້າ. ເວລານີ້ ພວກເຮົາໄດ້ມີຄວາມສັມພັນດີກາຍເປັນຄືນສົນທັນ, ພວກເຮົາສາມາດອວດໄດ້. ໃນພາສາກຣີກມີຄວາມໝາຍວ່າ ເອົາຄວາມຍິນດີເຂົ້າມາອວດໄດ້ໃນສິ່ງທີ່ພຣະເຈົ້າໄດ້ກະທຳເພື່ອເຮົາ. ໃນປຶ້ມຢາໂກໂບ ອາຈານໂປໂລໄດ້ໃຊ້ຄຳເວົ້ານີ້ຫລາຍກວ່າ 30 ເທື່ອ. ໃນປຶ້ມໂຣມ ອາຈານໂປໂລໄດ້ໜູນໃຈໃຫ້ເຮົາ "ອວດ" ຫລື ຍິນດີໃນສາມຢ່າງຕໍ່ລົງໄປນີ້:

(1) ໃນຄວາມແນ່ນອນໃຈທີ່ພວກເຮົາໄດ້ມີພາກສ່ວນໃນສະງ່າຣາສີກັບພຣະເຈົ້າທີ່ເມືອງຟ້າສວັນ (5:2)

(2) ໃນຄວາມທຸກທໍຣະມານຂອງເຮົາ (5:3)

(3) ໃນຄວາມສຳພັນໃໝ່ຂອງເຮົາກັບພຣະເຈົ້າ (ການຄືນດີ) (5:11)

## 2. <u>ເຮັດແນວໃດຊີວິດອັນປະເສີດນີ້ຈຶ່ງເກີດຂຶ້ນໄດ້?</u>

5:8 (1) <u>ເພາະພຣະເຈົ້າຊົງຮັກພວກເຮົາຊຶ່ງເປັນຄວາມຮັກທີ່ຫາບໍ່ໄດ້</u>.ຫລັກຖານຂອງຄວາມຮັກນີ້ ແມ່ນເວລາພຣະເຈົ້າໄດ້ສົ່ງພຣະບຸດອົງດຽວຂອງພຣະອົງເຂົ້າມາໃນໂລກນີ້ ແລະມາຕາຍເພື່ອຄວາມຜິດບາບຂອງພວກເຮົາ. ຂໍ້ 6-11 ໄດ້ຂຽນຂຶ້ນເປັນກາບກອນໃນບົດເພງສັຣເສີນ, ເວົ້າເຖິງຄວາມຮັກຂອງພຣະເຈົ້າ.

5:6,8,10 (2) <u>:ພາະພຣະຄຣິດໄດ້ຕາຍເພື່ອເຮົາ.</u> ຂໍ້ເຫລົ່ານີ້ໄດ້ເວົ້າຊ້ຳເຖິງການຕາຍຂອງອົງພຣະເຢຊູເພື່ອພວກເຮົາ. "ພຣະຄຣິດໄດ້ສິ້ນພຣະຊົນເພື່ອແທນຄົນຊົ່ວອະທັມ" (5:6). "ພຣະຄຣິດຕາຍເພື່ອພວກເຮົາ" (5:8) "ພວກເຮົາໄດ້ຄືນດີກັບພຣະເຈົ້າໂດຍການຕາຍຂອງພຣະບຸດຂອງພຣະອົງ" (5:10). ການຕາຍຂອງອົງພຣະເຢຊູເຮັດໃຫ້ຊີວິດປະເສີດ.

5:9, 10, 11. (3) ພວກເຮົາໄດ້ກາຍເປັນຄົນຊອບທັມ, ຄືນດີ, ແລະໄດ້ຮັບຄວາມພົ້ນ. ຊອບທັມເພາະພວກເຮົາໄດ້ຖືກປະກາດວ່າຄວາມບາບຂອງເຮົາໄດ້ລຶບລ້າງ ແລະກາຍເປັນຄົນທີ່ບໍ່ມີຄວາມຜິດຫຍັງເລີຍ. ຄຳເວົ້າ, "ຄືນດີ" ໄດ້ບອກເຖິງການເປັນສັດຕູຕໍ່ພຣະເຈົ້າໄດ້ຖືກຍົກໜີອອກໄປແລ້ວ. ອາຈານໂປໂລໄດ້ໃຊ້ຄຳເວົ້ານີ້ສັບປ່ຽນກັນໝາຍເຖິງໄດ້ຮັບຄວາມລອດພົ້ນ.

ຄຳວ່າ "ລອດພົ້ນ" ໃນ 5: 9-10 ບອກເຖິງການຕັນສິນໃນວັນສຸດທ້າຍ ທີ່ພຣະເຈົ້າຖືວ່າຜູ້ທີ່ເຊື່ອໄດ້ກາຍເປັນຄົນສິນທັມຫລືຊອບທັມແລ້ວ. ຜູ້ທີ່ເຊື່ອສາມາດປະເຊີນກັບວັນສຸດທ້າຍດ້ວຍຄວາມໝັ້ນໃຈ ແລະຮູ້ວ່າພຣະເຈົ້າຈະບໍ່ເອົາຄວາມຜິດ ເພາະພຣະຄຣິດໄດ້ເຮັດເພື່ອແລ້ວທີ່ເທິງໄມ້ກາງແຂນ. ພຣະຄັມພີໄດ້ເວົ້າເຖິງຄວາມລອດພົ້ນສາມຢ່າງ ໃນເວລາ: "ພວກເຮົາໄດ້ຮັບຄວາມລອດພົ້ນແລ້ວ" (ອຟຊ 2:8), ພວກເຮົາກຳລັງໄດ້ຮັບຄວາມລອດພົ້ນ" (2 ກຣທ 2:15), ແລະພວກເຮົາຈະໄດ້ຮັບຄວາມລອດພົ້ນ (ໂຣມ 13:11, ຮຣ 9:27-28). ດັ່ງນັ້ນ, ຄວາມໝາຍເຕັມປ່ຽມຂອງຄວາມລອດພົ້ນປະກອບ (1) ເປັນຄົນສິນທັມ, (2) ໄດ້ແຍກອອກໄວ້ເພື່ອຮັບໃຊ້ (3) ຮັບສະຫງ່າຣາສີ. ທັງໝົດນີ້ໄດ້ເວົ້າວ່າພວກເຮົາຈະໄດ້ຮັບຄວາມລອດພົ້ນຢ່າງແນ່ນອນ.

**3. ເອົາໃຈໃສ່ຕໍ່ຄວາມໝາຍ**

ການທີ່ພວກເຮົາມີສັນຕິສຸກກັບພຣະເຈົ້າ ບໍ່ໄດ້ໝາຍຄວາມວ່າຊີວິດນີ້ປາສຈາກບັນຫາ. ຄວາມຈິງແລ້ວຄວາມທຸກລຳບາກເປັນພາກສ່ວນຊີວິດຂອງຄຣິສຕຽນ. ຄຣິສຕຽນຈະໄດ້ພົບກັບຄວາມເຈັບປວດ. ພຣະຄຳທີ່ເວົ້າເຖິງຄວາມເຈັບປວດຫລືທຸກທໍຣະມານໃນບົດຕໍ່ໄປນີ້: 1 ກຣທ 4:11-13, 2 ກຣທ 11:23-28, 12:9-10. ໂຣມ 8:31-39). ແຕ່ຢ່າງໃດກໍຕາມເຖິງແມ່ນຄຣິສຕຽນບໍ່ສາມາດຈະຢູ່ປາສຈາກບັນຫາ ຫລືຄວາມເຈັບປວດ ແຕ່ພວກເຮົາສາມາດມີຄວາມຍິນດີໃນຖ້າມກາງຄວາມທຸກທໍຣະມານນັ້ນ-ບໍ່ແມ່ນຍິນດີໃນຄວາມເຈັບ. ພວກເຮົາບໍ່ຄວນຍິນດີກັບສິ່ງຊົ່ວຫລືບໍ່ດີ ຫລືສັຣເສີນພຣະເຈົ້າກັບສິ່ງພຣະເຈົ້າກຽດຊັງ. ຕົວຢ່າງ: ພະຍາດມະເຮັງ ຫລືອຸປະຕິເຫດຕາຍຂອງເດັກນ້ອຍນັ້ນບໍ່ແມ່ນສິ່ງດີ ສິ່ງເຫລົ່ານັ້ນບໍ່ແມ່ນແຜນການອັນທຳອິດເວລາພຣະເຈົ້າໄດ້ສ້າງໂລກນີ້ຂຶ້ນມາ. ແຕ່ຢ່າງໃດຕໍ່ຕາມພວກເຮົາສາມາດມີຄວາມຍິນດີໃນຖ້າມກາງຄວາມທຸກທໍຣະມານນັ້ນເພາະເຮົາຮູ້ວ່າພຣະເຈົ້າຈະໄດ້ຊ່ອຍໃນຍາມຢ່າງນັ້ນ. ພວກເຮົາສາມາດມີຄວາມຍິນດີໃນຖ້າມກາງຄວາມທຸກລຳບາກ ເພາະມັນຈະເຮັດໃຫ້ຄຣິສຕຽນອາສັຍພະລັງຂອງພຣະເຈົ້າເພີ້ມແລະເຮົາຈະກາຍເປັນຄົນແຂງແຮງຂຶ້ນກວ່າເກົ່າ. ຄວາມລຳບາກເຮັດໃຫ້ມີຄວາມອົດທົນ,ຜລິດໃຫ້ມີລັກຊະນະບຸກຄະລິກ ແລະຄວາມຫວັງດີຂຶ້ນ. (5:3-4). ພຣະຄຳພີທີ່ເວົ້າເຣື່ອງຄວາມທຸກທໍຣະມານເຫລົ່ານີ້ພວກເຮົາຈະເຫັນໃນປື້ມຢາໂກໂບ 3:3 ແລະ 1 ເປໂຕ 1:6-7.

ໃນເມື່ອພຣະເຈົ້າບໍ່ໄດ້ໃຫ້ເຮົາມີຊີວິດປະສຈາກຄວາມທຸກທໍຣະມານ, ແຕ່ພຣະເຈົ້າບໍ່ໃຫ້ເຮົາມີຄວາມສິ້ນຫວັງ, ຢູ່ຄົນດຽວໃນຖ້າມກາງຄວາມທຸກທໍຣະມານນັ້ນ. ພຣະອົງສັນຍາວ່າຈະເດີນໄປກັບເຮົາໃນຄວາມລຳບາກນັ້ນ. ພຣະອົງກ່າວວ່າ, "ເຮົາຈະບໍ່ໜີຈາກ ຫລືປະຖິ້ມທ່ານ." ດັ່ງນັ້ນ, ພວກເຮົາເວົ້າໄດ້ວ່າ ພຣະເຈົ້າເປັນພຣະຜູ້ຊ່ອຍ, ເຮົາຈະບໍ່ຢ້ານກົວສິ່ງໃດຈະທຳຮ້າຍຕໍ່ເຮົາໄດ້?

<u>**ແຜນການໃນການສອນ**</u>

ພະຍາຍາມໃຊ້ໃຫ້ຖືກກັບຊີວິດປະຈຳວັນ-ໃຫ້ມີລາຍການຮຽນຕ່າງໆ:

1. ຖາມນັກຮຽນໃນຫ້ອງຮຽນວ່າມີໃຜບໍ່ໄດ້ເຄີຍເຫັນໜັງເຖິງເຣື່ອງກຳລັງສຶກສາວັນນີ້ ທີ່ເວົ້າເຖິງຊີວິດອັນປະເສີດ. ເປີດໂອກາດໃຫ້ເລົ່າສິ່ງທີ່ພວກເຂົາເຈົ້າໄດ້ເຫັນ ໄດ້ອ່ານ ແລະປະສົບມະການ.

2. ອະທິບາຍເຖິງເຣື່ອງທີ່ໄດ້ຮຽນມາແລ້ວ, ພວກເຮົາພະຍາຍາມສຶກສາໃນເຣື່ອງທີ່ພຣະເຈົ້າໄດ້ກະທຳເພື່ອເຮົາຈະໄດ້ມີຊີວິດຕລອດໄປເປັນນິດ. ພວກເຮົາຈະໄດ້ເຫັນຊີວິດທີ່ມີຄຸນສົມບັດດີທີ່ພຣະເຈົ້າໄດ້ປະທານໃຫ້ແກ່ຜູ້ທີ່ເຊື່ອ.

3. ແບ່ງນັກຮຽນໃນຫ້ອງເປັນສອງກຸ່ມ.  ກຸ່ມນຶ່ງຈະເອົາໃຈໃສ່ສຶກສາຂໍ້ 1-5, ກຸ່ມສອງ ສຶກສາ ຂໍ້ 6-11.  ໃນເມື່ອມີຄົນອ່ານ ບົດ 5:1-11 ທັງສອງກຸ່ມນີ້ເອົາໃຈໃສ່ຟັງໃນສິ່ງທີ່ຕົວເອງຖືກມອບໝາຍໃຫ້.

4. ເວົ້າເຖິງສອງຄຳເວົ້າທີ່ສຳຄັນທີ່ເປັນຜົນກຳໄລທີ່ເຮົາໄດ້ໄວ້ວາງໃຈໃນພຣະເຈົ້າ: 1. ສັນຕິສຸກກັບພຣະເຈົ້າ 2. ມີຄວາມຍິນດີໃນຖ້າມກາງຄວາມທຸກລຳບາກ.

5. ນຳພາທຸກໆຄົນໃນຫ້ອງຮຽນສລູບຄວາມໝາຍຂອງບົດຮຽນທີ່ເວົ້າວ່າ, ແມ່ນຫຍັງເຮັດໃຫ້ຊີວິດຄຣິສຕຽນ ເປັນຊີວິດທີ່ປະເສີດ?

*ສຈ. ດຣ. ບຸນ ວົງສຸຣິດທ໌*

# ຄຳແນະນຳໃນການສອນ
# ບົດຮຽນທີ 7
# ມັນແມ່ນຊີວິດໃນທາງໃໝ່?

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 6:1-19

**ຂໍ້ພຣະຄັມພີທັງໝົດສຳລັບບົດຮຽນນີ້:** ໂຣມ 5:12-6:23

**ຈຸດສຳຄັນຂອງບົດຮຽນນີ້:** ໃນເມື່ອພວກເຮົາໄດ້ເຂົ້າຮ່ວມຄວາມສັມພັນກັບພຣະເຈົ້າຜ່ານ ພຣະຄຣິດ, ພວກເຮົາໄດ້ຍ່າງໄປໃນທາງຊີວິດໃໝ່ໃນການປົກ ຄອງພຣະຄຣິດເຈົ້າ.

**ຄຳຖາມເພື່ອການສຳຣວດ:** ຄຣິສຕຽນມີການປ່ຽນແປງອັນໃດເກີດຂື້ນໃນການດຳເນີນຊີວິດ?

**ຈຸດປະສົງຂອງບົດຮຽນນີ້:** ໄດ້ບອກເຖິງເປັນຫຍັງການໄດ້ເຂົ້າສ່ວນບັບຕິສມາກັບພຣະຄຣິດ ແລະຢູ່ໃນການປົກຄອງຂອງພຣະອົງນັ້ນຄວນໄດ້ຮັບການປ່ຽນ ແປງເກີດຂື້ນໃນຊີວິດຂອງຂ້າພະເຈົ້າ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ໄດ້ບອກວ່າພຣະຄັມພີເປັນພະລັງໃນການນຳພາໃນຊີວິດ ແລະການຮັບໃຊ້.
- ເພື່ອຈະແບ່ງປັນຂ່າວປະເສີດກັບທຸກໆຄົນ.
- ເສີມຂຍາຍຕົວໃຫ້ໃຫຍ່ຂື້ນ ແລະໃຫ້ຄວາມເຊື່ອມີຊີວິດຊີວາ.

## ອະທິບາຍພຣະຄັມພີ

### ການເຂົ້າໃຈເນື້ອເຣື່ອງ

ຕອນນີ້ແມ່ນການລົ້ມຄືນເຖິງຈຸດທີ່ອາຈານໂປໂລໄດ້ສັ່ງສອນໃນປື້ມໂຣມ: ໂຣມ 1-3:20 ໄດ້ບອກເຖິງວິບັດການສູນ ເສັຽຕໍ່ຄວາມບາບຂອງມະນຸສໂລກ. ທຸກຄົນເປັນຄົນຜິດຄົນບາບ ແລະບໍ່ມີຂໍ້ ແກ້ຕົວຕໍ່ພຣະພັກຂອງພຣະເຈົ້າ. ພວກ ເຮົາສົມຄວນໄດ້ຮັບການລົງໂທດອັນໜັກຈາກພຣະເຈົ້າ.

ໂຣມ 3:21-16 ໄດ້ປະກາດວ່າເຖິງຂ່າວດີວ່າ ພຣະເຈົ້າໂດຍຜ່ານທາງພຣະເຢຊູພຣະອົງໄດ້ຈັດຫາທາງໃຫ້ພວກເຮົາ ລຸດພົ້ນໜີໄປຈາກບາບ ເພາະອົງພຣະເຢຊູໄດ້ຍອມສິ້ນພຣະຊົນເຖິງໄມ້ກາງແຂນ, ດັ່ງນັ້ນ, ພຣະເຈົ້າໄດ້ປະກາດວ່າຜູ້ທີ່ ເຊື່ອໃນພຣະຄຣິດໄດ້ເປັນຄົນສິນທັມ ແລະຖືກໄຖ່ໄວ້ແລ້ວ ທີ່ພວກເຮົາບໍ່ສາມາດເຮັດເອົາໄດ້ ຫລືສົມຄວນຈະໄດ້ຮັບ ຄວາມລອດຈາກພຣະເຈົ້າ, ຄວາມພົ້ນນັ້ນແມ່ນຂອງພຣະຣາຊທານໃຫ້ລ້າງຊຶ່ງເປັນພຣະຄຸນຂອງພຣະເຈົ້າຕ່າງຫາກ.

ໂຣມ 4:1-25 ໄດ້ຈ້ອງມອງເບິ່ງຕົວຢ່າງຂອງອັບຣາຮາມທີ່ເວົ້າເຖິງຄວາມເຊື່ອ-ເພິ່ນບໍ່ໄດ້ຮັກສາບັນຍັດ ຫລືເຂົ້າຮ່ວມພິທີທາງສາສນາ. ຄວາມເຊື່ອເທົ່ານັ້ນຊຶ່ງເປັນພື້ນທາງດຽວທີ່ຈະໄດ້ຮັບຄວາມລອດພົ້ນຂອງພຣະເຈົ້າໄດ້. ພຣະເຈົ້າໄດ້ເຫັນວ່າຄວາມເຊື່ອຂອງອັບຣາຮາມແລະຖືວ່າເພິ່ນເປັນຄົນຊອບທັມ.

ໂຣມ 5 ໄດ້ອະທິບາຍວ່າຜູ້ທີ່ຮັບເອົາຄວາມລອດພົ້ນດ້ວຍຄວາມເຊື່ອຍອມມີຊີວິດໃໝ່ອັນປະເສີດດີ. ນັ້ນແມ່ນ "ຊີວິດທີ່ດີທີ່ສຸດແລ້ວ."

ບົດນີ້ ພວກເຮົາໄດ້ສຶກສາໃນບົດ 6. ໃນຕອນນີ້ທ່ານອາຈານ ໂປໂລໄດ້ທ້າທາຍຕໍ່ຜູ້ທີ່ໄດ້ຖືກໄຖ່ແລ້ວນັ້ນ ໃຫ້ມີຊີວິດໃໝ່ອັນປະເສີດຢ່າງແທ້ຈິງໂດຍຕໍ່ສູ້ກັບອຳນາດຂອງຄວາມບາບສເມີໄປ ແລະຈະເຣີນຂຶ້ນໃຫ້ມີຊີວິດເໝືອນອົງພຣະຄຣິດທີ່ບໍຣິສຸດດີ.

ຈຸດສຳຄັນໃນ ໂຣມ 6:1-19, ໄດ້ບອກເຖິງຄຳຖາມສອງຢ່າງທີ່ທ່ານອາຈານໂປໂລໄດ້ສລູບວ່າ, "ບ່ອນໃດມີຄວາມຜິດບາບຫລາຍ, ພຣະຄຸນຂອງພຣະເຈົ້າກໍຍິ່ງເພີ້ມຂຶ້ນ..." (ໂຣມ 5:20). ໃນເມື່ອຄວາມບາບເຮັດໃຫ້ມີພຣະຄຸນເພີ້ມຂຶ້ນ ຕໍ່ມາຈະເປັນຢ່າງໃດ:

(1) ພວກເຮົາສາມາດເຮັດຄວາມບາບເລື້ອຍໆເພື່ອຈະປະສົບກັບພຣະຄຸນຂອງພຣະເຈົ້າເພີ້ມອີກໄດ້ບໍ່? (6:1)

(2) ພວກເຮົາສາມາດເຮັດຄວາມບາບເລື້ອຍໆໃນເມື່ອເຮົາຢູ່ໃຕ້ພຣະຄຸນ ເພາະພວກເຮົາພົ້ນຈາກກົດບັນຍັດຕ່າງໆໄດ້ບໍ່? (6:15.)

ພວກເຮົາຈະເຫັນຄຳຕອບຂອງທ່ານອາຈານໂປໂລຕໍ່ສອງຂໍ້ນີ້ ຄືວ່າບໍ່! ເພິ່ນຮູ້ວ່າຄຣິສຕຽນເຮົາຍັງມີສິດທີ່ຈະເລືອກເອົາ ຫລືຕັດສິນໃຈ. ພວກເຮົາຈະເຮັດບາບຫລືບໍ່ນັ້ນ ມັນຂຶ້ນຢູ່ກັບພວກເຮົາເອງ. ມັນເປັນຄວາມຈິງທີ່ພວກເຮົາໄດ້ຮັບຄວາມລອດພົ້ນດ້ວຍພຣະຄຸນ, ແຕ່ພວກເຮົາຍັງບໍ່ໄດ້ເປັນຄົນປະເສີດຫຍັງເລີຍ. ພວກເຮົາຍັງຖືກການທົດລອງ, ບາງເທື່ອ ພວກເຮົາກໍພາກັນຕັດສິນໃຈເຮັດຜິດບາບຕໍ່ສູ້ພຣະເຈົ້າ. ແຕ່ພວກເຮົາຕ້ອງຍອມໃຫ້ອົງພຣະວິນຍານຂອງພຣະເຈົ້າປ່ຽນແປງໃຫ້ເຂົ້າໃນສະພາບໃໝ່ ການເປັນຄົນຊອບທັມຕາມທີ່ພຣະເຈົ້າມີໄວ້. ວິທີເຮັດໃຫ້ພວກເຮົາເປັນຄົນສິນທັມຈາກພຣະເຈົ້ານີ້ໄດ້ຮ້ອງວ່າ, "ແຍກອອກເພື່ອການຮັບໃຊ້."

<u>ເອົາໃຈໃສ່ຕໍ່ຄວາມໝາຍ</u>

<u>"ແຍກອອກເພື່ອການຮັບໃຊ້" ມີຄວາມໝາຍຢ່າງໃດ?</u> ອາຈານໂປໂລໃຊ້ຄຳເວົ້າ ແຍກອອກເພື່ອການຮັບໃຊ້ ໃນບົດ 6:19, ເປັນການດຳເນີນໄປ ບໍ່ແມ່ນການສຳເຣັດສຸດສິ້ນ. ພາສາກຣີກວ່າ <u>ຮາກິອາສໂມສ</u> ແປວ່າ <u>ຄວາມບໍຣິສຸດ</u> ຫລື <u>ຊຳຣະໃຫ້ບໍຣິສຸດ</u>. ການແຍກອອກເພື່ອຮັບໃຊ້ໃນຊີວິດຂອງຄຣິສຕຽນໃຫ້ຈະເຣີນຂຶ້ນເລີ້ມຕົ້ນຈາກເວລາເຊື່ອໃໝ່ໆ ເວລາເຮົາໄດ້ກາຍເປັນຄົນສິນທັມໂດຍຄວາມເຊື່ອດ້ວຍພຣະຄຸນຂອງພຣະເຈົ້າ. ເວລານັ້ນ ອົງພຣະວິນຍານບໍຣິສຸດຂອງພຣະເຈົ້າໄດ້ຫລໍ່ຫລອມເຮົາໃຫ້ຢູ່ໃນສະພາບໃໝ່ ຄືເປັນສະພາບແຫ່ງຄວາມຊອບທັມ ທີ່ພຣະເຈົ້າປະທານໃຫ້ແກ່ຜູ້ທີ່ເຊື່ອ. ເວລາເຮົາເຊື່ອ ພວກເຮົາໄດ້ຖືກແຍກອອກເພື່ອຮັບໃຊ້ຕລອດຊີວິດ, ຈະເຣີນຂຶ້ນໃນຄວາມບໍຣິສຸດ ແລະມີຊີວິດເປັນເໝືອພຣະຄຣິດເຈົ້າຂຶ້ນແຕ່ລະວັນ.

<u>ຄຣິສຕຽນສົມຄວນກາຍເປັນຄົນບໍ່ມີຄວາມຜິດບໍ່?</u> "ພວກເຮົາຮູ້ແລ້ວວ່າຜູ້ທີ່ໄດ້ເກີດໃນພຣະເຈົ້າຈະບໍ່ເຮັດຜິດບາບ" (1 ຢຮ 5:18). "ຜູ້ທີ່ຕິດສນິດກັບພຣະຄຣິດຈະບໍ່ເຮັດບາບ, ຜູ້ທີ່ເຮັດຜິດບາບນັ້ນບໍ່ໄດ້ເຫັນພຣະເຈົ້າ ແລະບໍ່ຮູ້ຈັກກັບພຣະອົງ...ຜູ້ທີ່ມັກເຮັດຜິດບາບນັ້ນ ເປັນລູກຂອງມານ..." (1 ຢຮ 3:6) ຂໍ້ດັ່ງກ່າວທີ່ເວົ້າມານັ້ນສອນວ່າ ຖ້າຂ້າພະເຈົ້າ

ເຮັດຜິດບາບ ຂ້າພະເຈົ້າກໍບໍ່ແມ່ນຄຣິສຕຽນຊັ້ນບໍ່? ການທີ່ເຂົ້າໃຈໃນພາສາກຣີກໄດ້ຊ່ອຍໃຫ້ຮູ້ດີເຖິງຄວາມໝາຍຂອງຂໍ້ທີ່ເຫັນວ່າຂັດແຍ້ງກັນ. ຄຳເວົ້າເປັນກິຣິຍາທີ່ເວົ້າເຖິງປັດຈຸບັນໄດ້ໝາຍເຖິງຄວາມຄິດເຮັດຜິດຕໍ່ເນື່ອງ, ເປັນນິສັຍມັກເຮັດຜິດບາບ. ຄຳເວົ້າໃນປຶ້ມ 1 ໂຢຮັນ ທີ່ເວົ້າວ່າ, "ຢ່າເຮັດບາບ, ບາບ, ແລະເຂົ້າໃນບາບ." ເປັນການແປຈາກຫລັກໄວຍະກອນທີ່ໃຊ້ເວລາໃນປັດຈຸບັນ ຄວນແປໄດ້ວ່າ, "<u>ຢ່າເຮັດບາບອີກຕໍ່ໄປ</u>, <u>ຢ່າມີນິສັຍເຮັດບາບ</u> <u>ແລະເຮັດບາບອັນເກົ່າຊ້ຳເລື້ອຍໆ."</u>

ບາງຄັ້ງຄຣິສຕຽນໄດ້ເຮັດຜິດ, ແຕ່ພວກເຮົາຈະບໍ່ມີນິສັຍເຮັດບາບເປັນປະຈຳ. ບາງຄັ້ງພວກເຮົາມີຄວາມຮູ້ສຶກຜິດແລະສັບສົນ, ແຕ່ພວກເຮົາເມື່ອຮູ້ສຶກຕົວແລ້ວຈະບໍ່ເຮັດບາບຊ້ຳເກົ່າໃຫ້ເປັນນິສັຍໃນຊີວິດ. ອາຈານໂປໂລ ຍອມຮັບວ່າ, "ບໍ່ແມ່ນເຮົາໄດ້ຮັບແລ້ວ ຫລືວ່າເຖິງທີ່ສຳເຣັດແລ້ວ ແຕ່ເຮົາກຳລັງບາກບັ່ນມຸ່ງໜ້າໄປ..."(ຟລປ 3:12) ຢາໂກໂບ ຍອມຮັບຄວາມຈິງຢ່າງດຽວກັນ, "ເພາະວ່າເຮົາທຸກຄົນເຮັດຜິດພາດຢູ່ເລື້ອຍ. (ຢກບ 3:2)

<u>ແຜນການສອນ</u>

1. ບອກວ່າອາຈານໂປໂລໄດ້ກ່າວເຖິງເຣື່ອງຍາກລຳບາກວ່າຄຣິສຕຽນມີເສຣີພາບ ຫລືພົ້ນຈາກຄວາມບາບ. ບອກເຖິງຂໍ້ສຳຄັນ. ໃຫ້ບອກວ່າສິ່ງສຳຄັນນັ້ນຄືທຸກໆເຣື່ອງທີ່ຄວນເຂົ້າໃຈນັ້ນມີສອງຢ່າງໄປຄຽງຄູ່ກັນ: ເໝືອນເງິນຫລຽນ, ມີເສຣີພາບ ຕ້ອງມີການຮັບຜິດຊອບ ທີ່ພວກເຮົາໃສ່ຫົວຂໍ້ວ່າ, "ໃນທີ່ສຸດ ເຮົາກໍມີເສຣີພາບ."

2. ໃຫ້ຮູ້ຈັກເບື້ອງຫລັງຂອງບົດຮຽນນີ້ ຄືໃຫ້ມີຄົນອ່ານ ໂຣມ 5:18-21, ແລະບອກໃຫ້ສຶກສາທີ່ມີຫົວຂໍ້ວ່າ "ໃນທີ່ສຸດເຮົາກໍໄດ້ມີເສຣີພາບ."

3. ໃຫ້ອະທິບາຍວ່າໃຈຄວາມສຳຄັນໃນ ໂຣມ 6:1-19, ອາຈານໂປໂລໄດ້ເວົ້າເຖິງບັນຫາອັນໃຫຍ່ຂອງຄວາມຜິດບາບໃນຊີວິດຄຣິສຕຽນ ແລະວິທີຄຣິສຕຽນຄວນມີຊີວິດຢູ່ໃນການປົກຄອງຂອງອົງພຣະຄຣິດ. ເຊີນໃຫ້ຜູ້ໃດຜູ້ນຶ່ງອ່ານອອກສຽງດັງຈາກ ບົດ 6:1-4 ໃນເມື່ອຄົນກຳລັງຟັງຢູ່ນັ້ນຈະມີຄຳຖາມ ໃຫ້ຖາມວ່າອາຈານໂປໂລໄດ້ ຕອບຄຳຖາມນັ້ນຢ່າງໃດ? ໃຫ້ບອກເຖິງຄຳຖາມໃນຂໍ້ທີ 1, ແລະຮ້ອງເອົາຫລາຍຄົນໃຫ້ຕອບແບບອາຈານໂປໂລ ແຕ່ໃຫ້ໃຊ້ຄຳເວົ້າຂອງຕົນເອງ.

4. ຂຽນໃສ່ກະດານ "ຊີວິດໃນຕົວມັນເອງຄືຄວາມຕາຍ, ແຕ່ຄວາມຕາຍໃນຕົວມັນເອງແມ່ນຊີວິດ." ເຊີນໃຫ້ຄົນອ່ານໂຣມ 6:5-14, ເປີດໂອກາດໃຫ້ທຸກໆຄົນໃນຫ້ອງຕອບວ່າໃນຂໍ້ທີ່ອ່ານໄປນັ້ນມີຄວາມໝາຍຢ່າງໃດ? ຖາມວ່າຄວາມຈິງໃນບົດນີ້ຈະຊ່ອຍໃຫ້ຜູ້ທີ່ເຊື່ອຄວນມີຊີວິດໃຕ້ການປົກຄອງຂອງພຣະຄຣິດ ແລະເອົາຊັຍຊະນະໄດ້ຢ່າງໃດ

*ສຈ. ດຣ. ບຸນ ວົງສຸຣິດທ໌*

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 8
## ຊີວິດພຣະເຈົ້າໃນທ່ານ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 8:1-11

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຣມ 7:1--8:11

**ຈຸດສຳຄັນຂອງບົດຮຽນນີ້:** ທາງຊີວິດທີ່ແທ້ບໍ່ແມ່ນການປະຖິ້ມຄວາມບາບ ຫລືການຮັກສາກົດ ແຕ່ແມ່ນການຍອມໃຫ້ພຣະວິນຍານບໍຣິສຸດຂອງພຣະເຈົ້າສະຖິດຢູ່ໃນພວກເຮົາດ້ວຍຄວາມເຊື່ອໃນພຣະຄຣິດ.

**ຄຳຖາມເພື່ອການສຳຣວດ:** ແມ່ນຫຍັງຄືເສັ້ນທາງສູ່ຊີວິດທີ່ແທ້ຈິງ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວ່າເປັນຫຍັງຊີວິດຂອງພຣະວິນຍານທີ່ຢູ່ໃນພວກເຮົາຈຶ່ງແມ່ນຊີວິດແທ້ ແລະ ເພື່ອຈະຮູ້ວ່າເຫລົ່າສິ່ງນີ້ມີຄວາມສຳຄັນຢ່າງໃນກັບຊີວິດເຣົາ.

### ແຜນການສອນ

### ນຳເຣື່ອງສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເລີ້ມການສອນດ້ວຍເຣື່ອງຕໍ່ໄປນີ້: ປື້ມຊື່ "ທະຫານຜີ" ໄດ້ເລົ່າເຣື່ອງການປົດປ່ອຍທະຫານອະເມຣິກັນຈຳນວນ 500 ຄົນຈາກການຄຸມຂັງຂອງຝ່າຍກົງກັນຂ້າມໃນສມັຍສົງຄາມໂລກຄັ້ງທີສອງ. ທະຫານຈາກໜ່ວຍຮົບພິເສດຈຳນວນ 125 ຄົນໄດ້ຮັບການຄັດເລືອກໃຫ້ໄປຊ່ວຍນັກໂທດສົງຄາມອອກຈາກຄ້າຍຄຸມຂັງທີ່ເມືອງລູຊອນ. ນັບວ່າເປັນເຣື່ອງອັສຈັນທີ່ທະຫານຈຳນວນນ້ອຍນີ້ໄດ້ຫລົບຊ້ອນໄປໃນເຂດຂອງສັດຕຣູ ຊຶ່ງມີຫລາຍພັນຄົນແລ້ວໄປແຫກຄຸກ ແລະນຳເອົາທະຫານອະເມຣິກັນ 500 ຄົນມາສູ່ເສຣີພາບຢ່າງປອດພັຍ. ແຕ່ເຣື່ອງນີ້ບໍ່ສາມາດທີ່ຈະທຽບກັບການປົດປ່ອຍຂອງພຣະເຈົ້າທີ່ຈະສຶກສາກັນໃນພຣະທັມໂຣມ 8.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ແນະນຳການສຶກສາ ໂຣມ 8 ໂດຍຂຽນຖ້ອຍຄຳຕໍ່ໄປນີ້ໃສ່ກະດານ: (ກ) ສັນຕິສຸກ; (ຂ) ຄວາມຍິນດີ; (ຄ) ພຣະຄຣິດ; (ງ) ຄວາມບາບ; (ຈ) ບັນຍັດ; (ສ) ພຣະວິນຍານບໍຣິສຸດ. ໃຫ້ຜູ້ນຶ່ງເລົ່າວ່າຖ້ອຍຄຳໃນກະດານນັ້ນກ່ຽວພັນກັນຢ່າງໃດແດ່? ພານັກຮຽນເບິ່ງປໂຍກສຸດທ້າຍໃນຄຳນຳຂອງບົດຮຽນທີ່ວ່າ, "ໂປໂລບັນທຶກໄວ້ວ່າ ຊີວິດທີ່ຈະມີສັນຕິສຸກໄດ້ ຈະຕ້ອງແມ່ນຊີວິດທີ່ຍອມໃຫ້ພຣະວິນຍານບໍຣິສຸດດຳເນີນຊີວິດຢູ່ໃນ; ຊັຍຊະນະຕໍ່ຄວາມບາບ ແລະ ສັນຕິສຸກກັບພຣະເຈົ້າເກີດຂື້ນຈາກການມີຄວາມສັມພັນສ່ວນຕົວກັບພຣະຄຣິດ." ໃຫ້ໂອກາດເພື່ອສະແດງຄວາມເຫັນ. ຊັກຊວນນັກຮຽນໃຫ້ຈົດຈຳປໂຍກນີ້ໄວ້ໃນໃຈ ເພື່ອຄວາມເຂົ້າໃຈບົດຮຽນນີ້.

3. ຖ້າທ່ານມີບົດຮຽນທີ 7 ທີ່ຜ່ານມາ, ຈົ່ງເບິ່ງຄຳສລູບໃນໂຣມ 7. ຖ້າບໍ່ມີໃຫ້ເບິ່ງຄຳອະທິບາຍໃນຫົວເຣື່ອງ, <u>ບໍ່ມີການລົງໂທດຈາກພຣະເຈົ້າ (8:1-4)</u> ໃນບົດຮຽນນີ້ນີ້ ເພື່ອເປັນຈຸດເລີ້ມ. ເບິ່ງຄຳສັນຍາເຣື່ອງຊັຍຊະນະໃນໂຣມ 8. ໃຫ້ຜູ້ນຶ່ງກັບໄປອ່ານ ໂຣມ 7: 24. ທ່ານຈະພົບຄຳຕອບສຳລັບຄຳຖາມນີ້ ຕອນສຶກສາໂຣມ 8:1-11.

4. ຖາມ: <u>ມີໃຜແດ່ເຄີຍມີປະສົບການເຣື່ອງຄວາມລຳບາກໃນການຕັດສິນໃຈເລືອກເອົາສິ່ງທີ່ຖືກຕ້ອງດັ່ງທີ່ເຫັນໃນ</u>

ຄຳໂອ່ຍຄາງຂອງໂປໂລໃນໂຣມ 7:24 ນີ້? ໃຫ້ເວລາແບ່ງປັນ ແລະສົນທະນາ.

5. ພານັກຮຽນສັງເກດເບິ່ງຄວາມແຕກຕ່າງໃນພຶດຕິການຂອງພວກເຮົາເວລາມີກົດບັງຄັບໃຫ້ເຮັດບາງຢ່າງ ແລະໃນເວລາທີ່ພວກເຮົາເຮັດຕາມໃຈສມັກ. ແບ່ງກະດານເປັນສາມພາກ; ຂຽນຫົວຂໍ້ໃສ່, ພາກນຶ່ງ: "ຄົນແລະສະພາບການ", ພາກສອງ: "ກົດໝາຍ"; ພາກສາມ: "ຄວາມຮັກ." ໃນພາກທີນຶ່ງໃຫ້ຂຽນຕໍ່ໄປນີ້ຕໍ່ກັນລົງເປັນລຳດັບ: (ກ) ຄູ່ຄອງ; (ຂ) ເພື່ອນບ້ານ; (ຄ) ລູກ; (ຈ) ນາຍຈ້າງ; (ສ) ເພື່ອນຮ່ວມງານ. ໃຫ້ນັກຮຽນອະທິບາຍທ່າທີຂອງພວກເຮົາຈະແຕກຕ່າງກັນແນວໃດເວລາມີກົດໝາຍບັງຄັບ ຫລືເວລາມີຄວາມຮັກບັງຄັບ. (ຄວາມແຕກຕ່າງກໍຄື ອັນນຶ່ງເຮັດນ້ອຍທີ່ສຸດເພື່ອຈະບໍ່ຜິດກົດໝາຍ ແລະອີກອັນນຶ່ງພຍາຍາມເຮັດດີທີ່ສຸດເພາະຄວາມຮັກ)

6. ໃຫ້ຜູ້ນຶ່ງອ່ານ ໂຣມ 8:1-4; ປຽບທຽບ "ກົດຂອງຄວາມຜິດບາບແລະຄວາມຕາຍ" ແລະ "ກົດຂອງພຣະວິນຍານອັນເຮັດໃຫ້ມີຊີວິດໃນພຣະເຢຊູຄຣິດ" (8:2). ເບິ່ງຄຳອະທິບາຍໃນບົດຮຽນຫົວຂໍ້, <u>ບໍ່ມີການລົງໂທດຈາກພຣະເຈົ້າ (8:1-4).</u>

7. ໃຫ້ຜູ້ນຶ່ງອ່ານ 8:5-8 ແລະຟັງເບິ່ງຄຳປຽບທຽບຊີວິດສອງແບບ (ຝ່າຍມະນຸດ, ພຣະວິນຍານ). ເບິ່ງຫົວຂໍ້ <u>ດຳເນີນຊີວິດໃນພຣະວິນຍານ (8:5-10)</u> ເພື່ອຊ່ວຍການອະທິບາຍ. ເນັ້ນ: ຄົນທັງຫລາຍທີ່ຢູ່ຝ່າຍມະນຸດຈະເປັນທີ່ຊອບພຣະທັຍພຣະເຈົ້າກໍບໍ່ໄດ້, ແລະ ພຣະເຈົ້າກໍຊົງພໍພຣະທັຍກັບຄົນທັງຫລາຍທີ່ຢູ່ຝ່າຍພຣະວິນຍານ.

8. ໃຫ້ຜູ້ນຶ່ງອ່ານ 8:9-11 ແລະໃຫ້ທຸກເບິ່ງຄວາມແຕກຕ່າງເວລາພວກເຮົາຕິດຕາມພຣະຄຣິດ. ໃຊ້ບົດຮຽນຫົວຂໍ້ <u>ຄວາມໝັ້ນໃຈໃນພຣະວິນຍານ (8: 11)</u> ເພື່ອເນັ້ນໃນຕອນນີ້. ໂຣມ 8:11 ເປັນຄຳຕອບສຳລັບຄຳຖາມຂອງໂປໂລໃນ ໂຣມ 7:24.

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

9. ເນັ້ນ: ຄວາມຮັບຜິດຊອບຄືສິ່ງສຳຄັນໃນການຈເຣີນເຕີບໃຫຍ່. ຊັກຊວນທຸກຄົນໃຫ້ຫາເພື່ອນຄຣິສຕຽນທີ່ຈະຊ່ວຍກັນໃນການທີ່ຈເຣີນຂຶ້ນໃນຄວາມເຊື່ອ. (ໃຊ້ເວລາຢູ່ນຳກັນເພື່ອສຶກສາພຣະທັມ ແລະການອ້ອນວອນ)

10. ຕອບຄຳຖາມໃນພາກສຸດທ້າຍຂອງບົດຮຽນ; ໃຊ້ເວລາສົນທະນາແຕ່ລະຂໍ້ໄປ (ຖ້າມີເວລາໃຫ້ຕອບໝົດທຸກຂໍ້). ອ້ອນວອນປິດ.

*ສຈ. ດຣ. ສິດນີ ຄານ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ນີ້ຄືຊີວິດທີ່ມີຊັຍຊະນະ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 8:12-39

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຣມ 8:12-39

**ຈຸດສຳຄັນຂອງບົດຮຽນນີ້:** ຊີວິດຄຣິສຕຽນອາດຈະມີບັນຫາແລະຄວາມລຳບາກ ແຕ່ເປັນຊີວິດທີ່ມີຊັຍເພາະຄວາມຮັກຂອງພຣະຜູ້ເປັນເຈົ້າໃນພຣະເຢຊູຄຣິດ.

**ຄຳຖາມເພື່ອການສຳຣວດ:** ໃຜຈະຊ່ວຍພວກເຮົາເວລາມີບັນຫາ ຫລືພົບຄວາມທຸກລຳບາກໃນຊີວິດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາຄຳສອນໃນພຣະທັມຕອນນີ້ ທີ່ຈະໃຫ້ຄວາມໝັ້ນໃຈສຳລັບຊີວິດຄຣິສຕຽນເມື່ອພົບກັບບັນຫາ ແລະຄວາມທຸກລຳບາກ.

## ແຜນການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຖາມ: ມີໃດແດ່ຈື່ຄວາມກັງວົນໃຈທີ່ເກີດຂຶ້ນກັບຕົວເອງເວລາມີການສອບເສັງ? ຕໍ່ໄປນີ້ແມ່ນການສອບອີກຂະນິດນຶ່ງ; ການສອບເພື່ອຊ່ອຍໃຫ້ຈົດຈຳບົດຮຽນທີ່ໄດ້ຮຽນມາແລ້ວ; ການສອບມື້ນີ້ທຸກຄົນຈະໄດ້ຄະແນນຜ່ານໝົດທຸກຄົນ. ໃຫ້ນັກຮຽນຕອບ:
   (1) ການຖືວ່າເປັນຄົນຊອບທັມເພາະຄວາມເຊື່ອຊ່ວຍຫຍັງເຮົາແດ່? (ໂຣມ 5:1)
   (2) ຄວາມຍາກລຳບາກຊ່ອຍຜູ້ທີ່ເຊື່ອແນວໃດແດ່? (ໂຣມ 5: 3,4)
   (3) ຄຣິສຕຽນຄວນຈະເຮັດບາບຫລາຍຂຶ້ນບໍ່ ເພື່ອຈະໄດ້ພຣະຄຸນຫລາຍຂຶ້ນ? (ໂຣມ 6:2)
   (4) ມີຫຍັງບໍ່ທີ່ຈະສາມາດແຍກຜູ້ເຊື່ອອອກຈາກຄວາມຮັກຂອງພຣະເຈົ້າ? (ໂຣມ 8:3-39)

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ຂຽນຊື່ບົດຮຽນ ແລະຫົວຂໍ້ໃຫຍ່ໃສ່ກະດານ.

   ຊັຍຊະນະຕໍ່ຄວາມຜິດບາບ (8:12-14)

   ຊັຍຊະນະຕໍ່ຄວາມຢ້ານກົວ (8:15-17)

   ຊັຍຊະນະຕໍ່ການທົດລອງ (8: 18-39)

3. ໃຫ້ຜູ້ນຶ່ງອ່ານ 8: 12-14. ເບິ່ງຄວາມແຕກຕ່າງຣະຫວ່າງ (ມະນຸດ ແລະພຣະວິນຍານ, ຄວາມຕາຍແລະຊີວິດ). ເນັ້ນ: ຖ້າພວກເຮົາດຳເນີນຊີວິດໃນຝ່າຍມະນຸດ ຜົນກໍຄືຄວາມຕາຍ; ແຕ່ຖ້າພວກເຮົາກຳເນີນຊີວິດຝ່າຍວິນຍານ ຜົນກໍຄືຊີວິດແລະສັນຕິສຸກ. ຖາມ: ໃຊ້ຄຳຖາມທີສອງໃນພາກສຸດທ້າຍຂອງບົດຮຽນນີ້.
4. ແນະນຳບົດຮຽນພາກຕໍ່ໄປ, "ຊັຍຊະນະຕໍ່ຄວາມຜິດບາບ (8:12-14)." ພານັກຮຽນຊອກຫາຄຳເວົ້າທີ່ມີຄວາມ

ໝາຍຄ້າຍກັນກັບຄຳວ່າ "ຢ້ານ." (ຄວາມກັງວົນ, ຄວາມຫວັ່ນໃຈ ...). ໃຫ້ຜູ້ນຶ່ງອ່ານ 8:15-17 ແລະໃຫ້ຟັງເບິ່ງວິທີທີ່ຈະເອົາຊະນະຄວາມຢ້ານ (ມີສ່ວນໃນຄອບຄົວພຣະເຈົ້າ, ໃກ້ພຣະເຈົ້າ, ຜູ້ຮັບມໍຣະດົກຈາກພຣະເຈົ້າ ແລະພຣະຄຣິດ). ການໄດ້ເປັນລູກຂອງພຣະເຈົ້າ ກໍພຽງພໍສຳລັບຕໍ່ສູ້ກັບຄວາມບໍ່ໝັ້ນໃຈ.

5. ເບິ່ງຫົວຂໍ້ທີສາມ, "ໄຊຊະນະຕໍ່ການທົດລອງ (8: 18-39)." ພຣະທັມໃນຕອນນີ້ມີຄຳໝູນໃຈສຳລັບຜູ້ທີ່ກຳລັງຢູ່ໃນຄວາມທຸກລຳບາກ. ໃຫ້ນັກຮຽນສີ່ຄົນອ່ານພຣະທັມສີ່ຕອນຕໍ່ໄປນີ້: (1) 8:18-25; (2) 8:26-27; (3) 8:28-30; (4) 8:31-39. ໃຫ້ນັກຮຽນຟັງເບິ່ງຂໍ້ພຣະທັມທີ່ໝູນໃຈ ແລ້ວຂຽນຂໍ້ພຣະທັມເຫລົ່ານັ້ນໃສ່ກະດານຟາກຊ້າຍຂອງກະດານ.

<u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

6. ເບິ່ງຂໍ້ພຣະທັມທີ່ໄດ້ຂຽນໄວ້ໃນກະດານ. ພານັກຮຽນເບິ່ງພຣະທັມທີ່ໃຫ້ຄວາມໝັ້ນໃຈວ່າຊີວິດຄຣິສຕຽນຄືຊີວິດທີ່ມີໄຊຊະນະເຖິງແມ່ນວ່າບາງຄັ້ງພວກເຮົາອາດຈະພົບກັບບັນຫາແລະຄວາມທຸກລຳບາກ.

7. ພານັກຮຽນເບິ່ງຄຳຖາມໃນພາກສຸດທ້າຍຂອງບົດຮຽນ; ເລືອກ 1 ຫລື 2 ຂໍ້ ເພື່ອພິຈາຣະນາ. ຊັກຊວນນັກຮຽນໃຫ້ນຳເອົາຄຳສອນໄປປະຕິບັດ.

8. ອ້ອນວອນປິດໂດຍການຂອບພຣະຄຸນພຣະເຈົ້າສຳລັບຄຳສອນທຸກຕອນໃນບົດຮຽນນີ້ ແລະຂອບພຣະຄຸນສຳລັບໄຊຊະນະໃນຄາວສຸດທ້າຍ ແລະໃນປັດຈຸບັນ ເຖິງວ່າຊີວິດນີ້ຈະເຕັມດ້ວຍບັນຫາ ແລະຄວາມທຸກລຳບາກ.

*ສຈ. ດຣ. ສີດນີ ຄານ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 10
# ມີຫຍັງແດ່ສຳລັບຊົນຊາດຢິວ?

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 9: 1-7; 10:1-13; 11: 1-2, 25-32

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຣມ 9--11

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຍັງຊົງປະທານຄວາມພົ້ນໃຫ້ແກ່ທຸກຄົນ, ຊຶ່ງໝາຍເຖິງຊົນຊາດຢິວ ແລະຊາວຕ່າງຊາດ.

**ຄຳຖາມເພື່ອການສຳຣວດ:** ພຣະເຈົ້າຊົງໃຊ້ວິທີໃດແດ່ ເພື່ອໂຜດຊົນຊາດຢິວໃນສມັຍນີ້?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຕິດຕາມເບິ່ງຄຳສອນຂອງໂປໂລເຣື່ອງການທຳງານຂອງພຣະເຈົ້າກັບຊົນຊາດຢິວ ແລະສລຸບເບິ່ງວ່າມີຫຍັງແດ່ສຳລັບຊາວຢິວໃນສມັຍປັດຈຸບັນ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ແນະນຳຊື່ບົດຮຽນໃນມື້ນີ້. ຂໍ້ມູນ: ຈາກການສຳຣວດໃນບໍ່ຫລາຍປີຜ່ານມານີ້ ປາກົດວ່າຄົນອະເມຣິກາເຊື້ອຊາດຢິວໄດ້ມີຈຳນວນຜ່ອນລົງຈາກ 5.5 ລ້ານຄົນໃນປີ 1990 ມາເປັນ 5.2 ລ້ານຄົນໃນປັດຈຸບັນ. ຄົນຢິວສ່ວນຫລາຍຍັງເຮັດພິທີສລອງຕາມຄວາມເຊື່ອຂອງສາສນາຢູດາຍ, ແຕ່ມີພຽງນຶ່ງສ່ວນສີ່ ເຖິງນຶ່ງສ່ວນສາມເທົ່ານັ້ນທີ່ຍັງມີການພົວພັນກັບກຸ່ມຄົນຢິວຂອງຕົນເອງ.

   ຂໍໃຫ້ນັກຮຽນຄິດເຖິງຄົນເຊື້ອຊາດຢິວທີ່ກຳລັງດຳເນີນຊີວິດຢູ່ຖ່າມກາງພວກເຂົາເຈົ້າໃນຂະນະທີ່ສຶກສາພຣະທັມໂຣມ 9 ແລະ 10 ຊຶ່ງອັຄສາວົກໂປໂລເປັນຄົນຂຽນ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ບອກນັກຮຽນວ່າການຮຽນມື້ນີ້ຈະຖືກແບ່ງອອກເປັນສີ່ພາກ. ຂຽນຫົວເຣື່ອງສີ່ຢ່າງທີ່ຈະສຶກສາໃນມື້ນີ້ໃສ່ກະດານ:
   (1) ຄວາມຮ້ອນຮົນຂອງໂປໂລ
   (2) ໄພ່ພົນຂອງພຣະເຈົ້າ
   (3) ຄົນຢິວ ແລະພຣະຄຣິດ
   (4) ໄພ່ພົນຈຳນວນນຶ່ງ

   ການຮຽນໃນພາກນີ້ຄວນຈະເປັນໄປໃນທຳນອງນີ້: (ກ) ແນະນຳຫົວເຣື່ອງ; (ຂ) ຕັ້ງຄຳຖາມ; (ຄ) ພິຈາຣະນາເນື້ອຫາ; (ງ) ເບິ່ງຄຳອະທິບາຍໃນບົດຮຽນ.

3. ເບິ່ງເຣື່ອງທີນຶ່ງ: "ຄວາມຮ້ອນຮົນຂອງໂປໂລ". ຖາມ: ມີເຫດຜົນຫຍັງແດ່ທີ່ເຮັດໃຫ້ໂປໂລຕ້ອງຮ້ອນຮົນກ່ຽວກັບຄົນຢິວ? ມີພຣະທັມຂໍ້ໃດທີ່ບອກໃຫ້ຮູ້? ໃຫ້ຜູ້ນຶ່ງອ່ານໂຣມ 9:1-3 ແລ້ວໃຫ້ເວລານັກຮຽນຕອບຄຳຖາມ. ອ່ານ: ເຢເຣມີຢາ 4:19-22 ແລະ ອົພຍົບ 32:32 ເພື່ອເບິ່ງຄວາມຮ້ອນຮົນໃນທຳນອງດຽວກັນນີ້ ກ່ຽວ

ກັບຄົນຊົນຊາດຢິວ. ອະທິບາຍ 9: 1-3.

4. ເບິ່ງເຣື່ອງທີສອງ: "ໄພ່ພົນຂອງພຣະເຈົ້າ." ຖາມ: ມີພຣະພອນຫຍັງແດ່ທີ່ພຣະເຈົ້າປະທານໃຫ້ກັບຊົນຊາດຢິວ? ໃຫ້ຜູ້ນຶ່ງອ່ານ 9: 4-5 ແລະຕອບຄຳຖາມໃນຕອນນີ້. ເບິ່ງຫົວຂໍ້ "ສິ່ງທີ່ພຣະເຈົ້າປະສົງສຳລັບທຸກໆຄົນ (9: 1 -7)" ແລະເບິ່ງຄຳອະທິບາຍໃນບົດຮຽນ.

5. ເບິ່ງເຣື່ອງທີສາມ: "ຄົນຢິວ ແລະພຣະຄຣິດ." ຖາມ: ເນື່ອງຈາກຊົນຊາດຢິວເປັນຊົນຊາດທີ່ພຣະເຈົ້າຊົງເລືອກໄວ້ສຳລັບພຣະອົງເອງ, ມີວິທີພິເສດບໍ່ທີ່ພຣະເຈົ້າມີໄວ້ເມື່ອຈະໃຫ້ຄົນຢິວພົ້ນໂດຍສເພາະ? ໃຫ້ຜູ້ນຶ່ງອ່ານ 10:1 -13. ຟັງຄຳຕອບຈາກນັກຮຽນ ແລ້ວອະທິບາຍພາກ "ເຫັນຜົນຂອງການຫລົງທາງ ແລະທາງສູ່ຄວາມພົ້ນ (10:1-13)" ເບິ່ງຄຳອະທິບາຍໃນບົດຮຽນ. ເນັ້ນ: ຄວາມພົ້ນໄດ້ມາເພາະຄວາມເຊື່ອໃນພຣະຄຣິດ ແລະນີ້ຄືທາງສູ່ຄວາມພົ້ນສຳລັບມະນຸດທຸກໆຄົນ (ຊົນຊາດຢິວ ແລະຄົນຕ່າງຊາດ).

6. ເບິ່ງເຣື່ອງທີສີ່: "ໄພ່ພົນຈຳນວນນຶ່ງ." ຖາມ: ໂປໂລເຫັນສະພາບຂອງຊົນຊາດຢິວແນວໃດໃນເວລາຂອງພຣະເຈົ້າ? ອ່ານ ໂຣມ 11:1-2, 25-32 ແລະໃຫ້ທຸກຄົນຟັງຄຳຕອບຈາກພຣະທັມໃນຕອນນີ້. ໃຫ້ເວລາຕອບ ແລະເນັ້ນເຣື່ອງພຣະເຈົ້າບໍ່ໄດ້ປະຖິ້ມຊົນຊາດຢິວ (11:1-2). ໃຫ້ເບິ່ງ 11:25-26 ທີ່ໂປໂລບອກວ່າໄພ່ພົນຈຳນວນນຶ່ງຈະຕ້ອງເຊື່ອພຣະຄຣິດ ແລະໄດ້ຄວາມພົ້ນ. ອະທິບາຍບົດຮຽນພາກ "ຄວາມໝັ້ນໃຈໃນພຣະສັນຍາ (11:1-2, 25-32)" ແລະຄຳສລຸບໃນບົດຮຽນ.

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ໃຊ້ຄຳຖາມໃນພາກສຸດທ້າຍຂອງບົດຮຽນເພື່ອຊ່ວຍໃນການສລູບການສຶກສາພຣະທັມໃນຕອນນີ້. ສລູບສິ່ງທີ່ພຣະທັມສອນເຣື່ອງກ່ຽວກັບຊົນຊາດຢິວໃນສມັຍນີ້. ປິດທ້າຍບົດຮຽນດ້ວຍ <u>ຄຳຖາມເພື່ອການສຳຣວດ</u>: ພຣະເຈົ້າຊົງໃຊ້ວິທີໃດແດ່ ເພື່ອໂຜດຊົນຊາດຢິວໃຫ້ພົ້ນ ໃນສມັຍນີ້? ໃຫ້ເວລາຕອບ ແລະສົນທະນາ.

*ສຈ. ດຣ. ສິດນີ ຄານ*

## <u>ບົດແນະນຳຄູສອນ</u>

## <u>ບົດຮຽນທີ 11</u>

## <u>ມີຊີວິດທີ່ເໝາະກັບພຣະເມດຕາ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ໂຣມ 12:1-8

**<u>ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:</u>** ໂຣມ 12:1-8

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ເມື່ອພຣະເຈົ້າເມດຕາເຮົາຫຼາຍປານນັ້ນ ເຮົາຄວນຖວາຍຕົວໃຫ້ພຣະອົງ.

**<u>ຄຳຖາມເພື່ອການສຳຣວດ:</u>** ເຮົາຈະຖວາຍຕົນເອງຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອນຳທ່ານໃຫ້ຖວາຍຕົວຕໍ່ພຣະອົງ.

**<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

### <u>ບົດນຳ</u>

ພຣະທັມໂຣມບົດ 11ໄດ້ກ່າວເຖິງພຣະເມດຕາກະຣຸນນາຂອງພຣະເຈົ້າທີ່ມີຕໍ່ມະນຸດ ສ່ວນພຣະທັມໂຣມບົດ 12 ແມ່ນເຣື່ອງຕໍ່ເນື່ອງຈາກບົດ 11 ຊຶ່ງມີເນື້ອຄວາມພໍສລູບໄດ້ໃນບົດ 12 ດັ່ງນີ້; ເມື່ອພຣະເຈົ້າຊົງພຣະເມດຕາກະຣຸນາຫລາຍປານນັ້ນ ມະນຸດເຮົາສົມຄວນຈະຖວາຍຕົວຕໍ່ພຣະອົງເພື່ອເປັນເຄື່ອງບູຊາຫລືເຄື່ອງຖວາຍທີ່ມີຊີວິດ.

### <u>ຖວາຍຕົວທຸກວັນເວລາ 12:1-2</u>

ໂປໂລເລີ້ມຕົ້ນບົດ 12:1 ວ່າ *"ເຫດສັນນັ້ນ"* ແມ່ນເພິ່ນໄດ້ອ້າງອີງໃສ່ບົດ 11 ເພາະໃນບົດ 11 ໄດ້ເວົ້າພຣະຄຸນພຣະເຈົ້າຕໍ່ພວກເຮົາ ເມື່ອພຣະເຈົ້າມີພຣະຄຸນເຖິງພຽງນັ້ນເຮົາທຸກຄົນສົມຄວນຍອມຖວາຍຕົນໃຫ້ກັບພຣະອົງ, ຫາກຈະເວົ້າຕາມພາສາຊາວບ້ານແລ້ວຈະເວົ້າວ່າ; ເພາະພຣະເຈົ້າຊົງເມດຕານັ້ນ ເຮົາຈຶ່ງຊັກຊວນໃຫ້ພວກເຈົ້າຖວາຍຕົວ. ຄຳວ່າຖວາຍຕົວແປວ່າ ຍອມຈຳນົນຕົວເປັນຂອງພຣະອົງທຸກໆວັນ ແລະໃຫ້ພວກເຮົາເຮັດຕາມນໍ້າພຣະທັຍພຣະອົງ.

ການຖວາຍຕົວໂປໂລບອກວ່າ *"ເພື່ອເປັນເຄື່ອງບູຊາທີ່ມີຊີວິດ"* ກໍເພາະວ່າໃນສມັຍເດີມພວກອິສຣາເອນມັກຈະຂ້າສັດເຜົາຖວາຍບູຊາພຣະເຈົ້າໃນເທສການຕ່າງໆ. ມາບັດນີ້ໂປໂລໄດ້ຂໍຮ້ອງໃຫ້ຄຣິສຕຽນໃນກຸງໂຣມຖວາຍຕົວຊຶ່ງເປັນການບໍຣິສຸດ ດ້ວຍວ່າຊີວິດກໍດີກວ່າສັດທີ່ຖືກຂ້າແລ້ວ, ໂປໂລຍັງຢໍ້າອີກວ່າການຖວາຍຕົວນີ້ *"ເປັນອັນບໍຣິສຸດ, ແລະເປັນທີ່ຊອບພຣະທັຍພຣະເຈົ້າ"*. ດັ່ງນັ້ນແຫລະການທີ່ເຮົາເຮັດທຸກຢ່າງກໍເພື່ອພຣະເຈົ້າຈະພໍພຣະທັຍ.

### <u>ມີຊີວິດເໝາະກັບຄວາມເຊື່ອ 12: 3</u>

ຫລາຍເທື່ອເຮົາເຫັນວ່າການໃຊ້ຊີວິດຂອງເຮົາທັງຫລາຍຜູ້ທີ່ພຣະເຈົ້າຊົງປ່ຽນແປງແລະຊົງຖືວ່າເປັນຄົນຊອບທັມແລ້ວ ຍັງບໍ່ໄດ້ປະຕິບັດຕົນໃຫ້ເໝາະກັບການທີ່ພຣະເຈົ້າຊົງປ່ຽນນັ້ນ ດ້ວຍເຫດນີ້ໂປໂລຈຶ່ງແນະນໍາໃຫ້ຄຣິສຕຽນໃນກຸງໂຣມ ມີຄວາມຖ່ອມໃຈໂດຍບໍ່ຄິດໃນໃຈວ່າຕົນເອງດີກວ່າຄົນອື່ນ, ຫລືເກັ່ງກວ່າຄົນອື່ນ, ຫລືເປັນຜູ້ນໍາກໍຢ່າຖືຕົວວ່າພຣະພອນ ຕົນເອງດີກວ່າຄົນອື່ນ. ການເປັນຄຣິສຕຽນບໍ່ຄວນໂອ້ອວດໃນຂອງພຣະຣາຊທານທີ່ຕົນເອງໄດ້ຮັບ ຄວນຈະໃຊ້ຂອງພຣະຣາຊທານນັ້ນຕາມຣິດເດດ ແລະຕາມຂນາດແຫ່ງຄວາມເຊື່ອທີ່ມີການປະຕິບັດຂອງຕົນຈຶ່ງຈະມີຊີວິດທີ່ເໝາະສົມກັບພຣະເມດຕາຂອງພຣະເຈົ້າທີ່ມີຕໍ່ຕົນເອງ.

### <u>ເປັນກາຍດຽວກັນ 12:4-5</u>

ພຣະເຈົ້າໄດ້ຊົງສ້າງຮ່າງກາຍຂອງຄົນເຮົາໃຫ້ມີຫລາຍພາກສ່ວນແຕ່ລະສ່ວນມີໜ້າທີ່ຂອງໃຜລາວ ຫາກພາກສ່ວນໃດພາກສ່ວນນຶ່ງຂອງຮ່າງກາຍບໍ່ທໍາງານຫລືກໍາລັງເຈັບປ່ວຍ ກໍຈະນໍາຜົນສະທ້ອນໄປທົ່ວຮ່າງກາຍ. ດ້ວຍເຫດນີ້ໂປໂລຈຶ່ງຍົກເອົາເຣື່ອງຮ່າງກາຍມາສົມທຽບໃນການເປັນຄຣິສຕຽນໃນໂບດດຽວກັນຄ້າຍກັບວ່າເຮົາທັງໝົດເປັນອະໄວຍະວະແຕ່ລະພາກສ່ວນໃນອົງພຣະເຢຊູຄຣິດ. *"ເພາະວ່າໃນຮ່າງກາຍອັນດຽວນັ້ນເຮົາມີອະວັຍວະຫລາຍຢ່າງ ແລະອະວັຍວະເຫລົ່ານັ້ນບໍ່ມີໜ້າທີ່ຢ່າງດຽວກັນສັນໃດພວກເຮົາຜູ້ເປັນຫລາຍຄົນກໍຍັງເປັນຮ່າງກາຍອັນດຽວໃນພຣະຄຣິດ ແລະເປັນອະວັຍວະແກ່ກັນແລະກັນສັນນັ້ນ" (ຂໍ້ 4-5)*

### <u>ຊີວິດທີ່ມີໝາກຜົນ 12:6-8</u>

1. ສົນທະນາເຣື່ອງ ເຮົາທຸກຄົນໄດ້ຮັບຂອງພຣະຣາຊທານຕາມນໍ້າພຣະທັຍພຣະອົງ ທ່ານເຂົ້າໃຈຢ່າງໃດ?
2. ສົນທະນາ *"ກິ່ງທຸກກິ່ງໃນເຮົາທີ່ບໍ່ເກີດຜົນ ພຣະອົງຊົງລິເສັຽ ແລະກິ່ງທຸກກິ່ງທີ່ເກີດຜົນ ພຣະອົງຊົງຕອນເພື່ອໃຫ້ເກີດຜົນຫລາຍຂຶ້ນ"* (ໂຢຮັນ 15:2) ແຕ່ລະຄົນເຂົ້າໃຈຢ່າງໃດ?
3. ສົນທະນາ *ຖ້າເປັນການປະກາດພຣະທັມ ກໍຈົ່ງປະກາດຕາມຂນາດແຫ່ງຄວາມເຊື່ອ ຖ້າເປັນການສັ່ງສອນກໍຈົ່ງສັ່ງສອນຖ້າເປັນການເຕືອນສະຕິກໍຈົ່ງເຕືອນສະຕິ* ໝາຍຄວາມວ່າແນວໃດ?
4. ສົນທະນາ *ຖ້າເປັນການບໍຣິຈາກກໍຈົ່ງບໍຣິຈາກດ້ວຍໃຈກວ້າງຂວາງ* ໝາຍຄວາມວ່າແນວໃດ?
5. ສົນທະນາ *ຜູ້ຄຸ້ມຄອງກໍຈົ່ງຄຸ້ມຄອງດ້ວຍເອົາໃຈໃສ່ ຜູ້ທີ່ສະແດງຄວາມເມດຕາກໍຈົ່ງສະແດງດ້ວຍໃຈຍິນດີ* ໂປໂລເວົ້າເຖິງໃຜ?
6. ສົນທະນາ ທັງຫ້າຢ່າງຂ້າງເທິງມີຊີວິດທີ່ເກີດຜົນຢ່າງໃດ?

*ສຈ. ດຣ. ທຸມພັນ ວົງສຸຣິດທ໌*

# <u>ບົດແນະນຳຄູສອນ</u>
# <u>ບົດຮຽນທີ 12</u>
# <u>ເອີ້ນມາຢູ່ໃນຄວາມເຊື່ອ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ໂຣມ 12:9-18; 13:1-14
**<u>ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:</u>** ໂຣມ 12:9--13:14
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ການເປັນເປັນຄຣິສຕຽນຈຳຕ້ອງປະຕິບັດຕາມພຣະທັມໃນທຸກບ່ອນ.
**<u>ຄຳຖາມເພື່ອການສຳຣວດ:</u>** ແມ່ນຫຍັງເປັນເຄື່ອງຊັກຈູງທ່ານໃນການຢູ່ກິນແຕ່ລະວັນວັນໆ.
**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຊັກຊວນໃຫ້ຄຣິສຕຽນປະຕິບັດຕາມຄວາມເຊື່ອ

**<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## <u>ບົດນຳ</u>

ບອກນັກຮຽນວ່າວັນນີ້ພວກເຮົາຈະເວົ້າເຣື່ອງບາດກ້າວແຣກທີ່ເຮົາຈຳຕ້ອງປະຕິບັດຫລັງຈາກເຮົາເປັນຄຣິສຕຽນແລ້ວ ແລະບາດກ້າວທີ່ສອງ ເຮົາຈະເວົ້າກັນເຣື່ອງເປັນຄຣິສຕຽນແລ້ວກໍຈິງເຮົາຍັງໃຊ້ຊີວິດໃນໂລກຮ່ວມກັບຜູ້ບໍ່ເຊື່ອແລະມີເຈົ້ານາຍຫລືຜູ້ປົກຄອງຝ່າຍໂລກນີ້ ເຮົາຈະຕ້ອງເຮັດແນວໃດຕໍ່ພວກຜູ້ມີອຳນາດເຫລົ່ານີ້.

## 1. <u>ເພື່ອຄວາມສົມບູນ 12:9-18</u>

ກ. *ຈົ່ງຮັກດ້ວຍໃຈຈິງ ຈົ່ງກຽດຊັງສິ່ງຊົ່ວ ຈົ່ງຍຶດຫມັ້ນໃນສິ່ງທີ່ດີ ຈົ່ງຮັກກັນເຫມືອນສັນພີ່ນ້ອງ* (ຂໍ້ 9) ເປັນຄຣິສຕຽນຈຳຕ້ອງມີຄວາມຮັກ, ບໍ່ແມ່ນຮັກແຕ່ປາກ ແຕ່ແມ່ນຮັກຈາກໃຈ ແລະຮັກແບບພີ່ນ້ອງ ເພາະຄວາມຮັກແບບພີ່ນ້ອງນັ້ນມີການຊ່ອຍເຫລືອເກື້ອກູນ, ເບິ່ງແຍງກັນຍາມຍາກລຳບາກຫລືຍາມເຈັບເປັນແລະອື່ນໆ.

ຂ. ໂປໂລໃຊ້ຄຳວ່າ "ຈົ່ງ" ແລະຄຳວ່າ "ຢ່າ" ຫລາຍບ່ອນເປັນການສັ່ງຢ່າງໜັກແໜ້ນໃນການສັ່ງສອນຂອງເພິ່ນ.

ຄ. "*ຖ້າເປັນໄດ້ໃນເຣື່ອງທີ່ຂຶ້ນຢູ່ກັບພວກເຈົ້ານັ້ນ ຈົ່ງຢູ່ຢ່າງສງົບສຸກກັບຄົນທັງປວງ* "(ຂໍ້ 18). ໝາຍເຖິງພວກທີ່ບໍ່ເຊື່ອພຣະເຈົ້າທີ່ຢູ່ອ້ອມຂ້າງເຮົາອາດໝິ່ນປມາດຫລືຢຽບຢ່ຳຜູ້ທີ່ເຊື່ອພຣະເຈົ້າ, ນອກນັ້ນຍັງມີພວກກຽດຊັງທ່ານໂດຍບໍ່ມີເຫດຜົນຈົນເຖິງຂັ້ນໃຊ້ອຳນາດກົດຂີ່ຂົ່ມເຫັງເຂັ່ນຂ້າຄຣິສຕຽນ ໂປໂລສອນວ່າ *ຖ້າເປັນໄປໄດ້ໃນເຣື່ອງທີ່ຂຶ້ນຢູ່ກັບພວກເຈົ້ານັ້ນຈົ່ງຢູ່ຢ່າງສງົບສຸກ*" ອີງຕາມຈິດໃຈມະນຸດແລ້ວມັນເປັນໄປບໍ່ໄດ້ດອກທີ່ຈະບໍ່ມີການຕໍ່ສູ້ກັນ ແຕ່ໃນພຣະນາມຂອງພຣະເຈົ້າເຮົາສາມາດເຮັດໄດ້ທຸກຢ່າງໂປໂລກ່າວວ່າ "*ເຮົາສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊູກຳລັງເຮົາ* "(ຟີລິປອຍ 4:13). ຫລືຈະເວົ້າວ່າເຮົາເຮັດທຸກສິ່ງໄດ້ໂດຍອາສັຍພຣະເຈົ້າເປັນຜູ້

ຊູກຳລັງ. ເພື່ອຄວາມສົມບູນໃນຖານະເປັນຜູ້ເຊື່ອ *"ຢ່າເຮັດຊົ່ວຕອບແທນການຊົ່ວແກ່ຜູ້ໜຶ່ງຜູ້ໃດ ແຕ່ຈົ່ງພະຍາຍາມເຮັດແຕ່ສິ່ງທີ່ທຸກຄົນເຫັນວ່າດີ".* (ຂໍ້ 17). ເພາະວ່າເຮົາທັງຫລາຍເປັນຜູ້ປະກາດຂ່າວປະເສີດແຫ່ງສັນຕິສຸກ.

ຂ. <u>ຄິສຕຽນກັບສັງຄົມ 13:1-14</u>

ກ. ເຮົາທັງຫລາຍຖືກເອີ້ນອອກມາຈາກຝ່າຍໂລກ ແປວ່າອອກຈາກການດຳເນີນຊີວິດໃນໂລກແຫ່ງຄວາມມືດ ແຕ່....ຍັງຢູ່ໃນໂລກຢູ່ ແປວ່າຍັງໃຊ້ຊີວິດຢູ່ກັບສັງຄົມແລະພາຍໃຕ້ລະບຽບການຂອງໂລກຢູ່.

ຂ. ໃນຖານະເຮົາເປັນຄຣິສຕຽນ ເຮົາຄວນປະຕິບັດຕົນ;

1. ຍອມຢູ່ໃຕ້ອຳນາດການປົກຄອງ ເພາະພຣະເຈົ້າເປັນຜູ້ແຕ່ງຕັ້ງຜູ້ປົກຄອງ (ຂໍ້ 1)
2. ຫາກຜູ້ປົກຄອງໃຊ້ອຳນາດໃນທາງຜິດ ຄຣິສຕະຊົນຄວນເລືອກຟັງພຣະເຈົ້າ ແລະອ້ອນວອນເພື່ອເຂົາໃຫ້ໃຊ້ອຳນາດແບບຖືກຕ້ອງ.
3. ພວກຜູ້ປົກຄອງຫລືກົດໝາຍປົກປ້ອງຄົນດີ ແລະລົງໂທດຄົນຊົ່ວ (ຂໍ້ 2-4).
4. ການເສັຽຊ່ວຍພາສີອາກອນບໍ່ມີໃຜຫລີກລ້ຽງໄດ້ (ຂໍ້ 5-7).
5. ຢ່າເປັນໜີ້ສິ່ງໃດແກ່ໃຜນອກຈາກຄວາມຮັກຊຶ່ງກັນແລະກັນ ເພາະວ່າຜູ້ທີ່ຮັກເພື່ອນມະນຸດກໍປະຕິບັດຕາມພຣະບັນຍັດຢ່າງຄົບຖ້ວນແລ້ວ" (ຂໍ້ 8)ໂປໂລເວົ້າເຖິງເປັນໜີ້ພາສີໃນຂໍ້ 7 ແລະບໍ່ສອນໃຫ້ຄຣິສຕຽນເປັນໜີ້ເງິນຄຳແລະສິ່ງຂອງອັນໃດຕໍ່ກັນ ແຕ່ສອນໃຫ້ເປັນໜີ້ຄວາມຮັກຕໍ່ກັນ ເພາະວ່າໜີ້ຄວາມຮັກໃຊ້ບໍ່ໝົດ. (ໃຫ້ອະທິບາຍເລື່ອງໜີ້ ເງິນຄຳ ແລະໜີ້ຄວາມຮັກເພີ້ມເຕີມ).
6. ການປະຕິບັດຕົນກັບສັງຄົມຈາກຂໍ້ 12-14.

<u>**ຄຳຖາມ:**</u> ໃຊ້ຄຳຖາມໃນບົດຝຶກຫັດ

*ສຈ. ດຣ. ທຸມພັນ ວົງສຸຣິດທ໌*

# ບົດແນະນຳຄູສອນ
# ບົດຮຽນທີ 13
# ຍອມຮັບຊຶ່ງກັນແລະກັນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 14:1-21
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ໂຣມ 14:1--15:3
**ຈຸດສຳຄັນຂອງບົດຮຽນນີ້:** ຊັກຊວນຄຣິສຕຽນບໍ່ໃຫ້ຕັດສິນຜູ້ໃດ ແລະຄວນຊອກຫາທາງປອງດອງ.
**ຄຳຖາມເພື່ອການສຳຣວດ:** ເຮັດແນວໃດຈຶ່ງຈະຫລຸດຜ່ອນການຕັດສິນຂອງເຮົາໄດ້?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊ່ອຍທ່ານໃຫ້ຮູ້ຈັກວິທີທາງຫລຸດຜ່ອນການຕັດສິນຂອງທ່ານ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ເຮົາຕ້ອງຍອມຮັບວ່າຄຣິສຕຽນໃນໂບດດຽວກັນມາຈາກຫລາຍພໍ່ຫລາຍແມ່ ຍິ່ງໄປກວ່ານັ້ນຍັງມາຈາກຫລາຍບ້ານຫລາຍເມືອງ ແຕ່ລະບ້ານເມືອງມີຂນົບທັມນຽມ ແລະວັດທະນະທັມບໍ່ຄືກັນກັນ ເມື່ອມາຢູ່ຮ່ວມກັນໃນພຣະເຢຊູຄຣິດເຮົາບໍ່ຄວນເອົາຄວາມແຕກຕ່າງມາເວົ້າກັນ ໂດຍສເພາະຢ່າງຍິ່ງແມ່ນເຣື່ອງຄວາມເຊື່ອແລະຄວາມເຂົ້າໃຈບໍ່ຄືກັນເຮົາຈະເຫັນບັນຫາທີ່ກຸງໂຣມ ເພື່ອເປັນບົດຮຽນທີ່ດີຂອງພວກເຮົາດັ່ງຕໍ່ໄປນີ້;

## ເບິ່ງໃນທາງບວກ 14:1-12

ກ. ຄົນທີ່ອ່ອນໃນຄວາມເຊື່ອ (ຂໍ້ 1) ອາຈໝາຍເຖິງຜູ້ເຊື່ອໃໝ່ ຫລືພວກທີ່ຂາດຄວາມເຂົ້າໃຈໃນການດຳເນີນຊີວິດຝ່າຍຈິດວິນຍານ ໃຫ້ຍອມຮັບເຂົາໃນຖານະເປັນນ້ອງ ແລະຊ່ອຍໃຫ້ເຂົາເຂົ້າໃຈດ້ວຍອ່ອນສຸພາບ, ຄຶດເສັຽວ່າເປັນໂອກາດທີ່ເຮົາຈະໄດ້ຮັບໃຊ້.
ຂ. ເລົ່າເຣື່ອງຄວາມເສັຽໃນບົດຝຶກຫັດ ແຕ່ລາວຂອບພຣະຄຸນ ເພາະຕົນເອງບໍ່ເສັຽ, ເປັນວິທີທາງທີ່ດີ.
ຄ. ຈາກຂໍ້ 1-4 ແມ່ນໂປໂລຕັກເຕືອນຄຣິສຕຽນບໍ່ໃຫ້ເບິ່ງກັນໃນທາງລົບ.
ງ. ຈາກຂໍ້ 5-8 ຄົນອ່ອນແອແລະຄົນເຂັ້ມແຂງເປັນຄົນຂອງພຣະເຈົ້າຄືກັນ ແລະພຣະຄຣິດກໍໄດ້ຕາຍເພື່ອຄົນອ່ອນແອແລະເຂັ້ມແຂງສເມີກັນ ດັ່ງນັ້ນບໍ່ຄວນຕັດສິນກັນ.
ຈ. ຈາກຂໍ້ 9-12 ໂປໂລແນະນຳໃຫ້ຖາມຕົນເອງວ່າແມ່ນໃຜຈຶ່ງຕັດສິນຜູ້ອື່ນ? ທັງຄົນເຂັ້ມແຂງແລະຄົນອ່ອນແອກໍຈະຢືນຕໍ່ໜ້າພຣະເຈົ້າເພື່ອລາຍງານການຂອງຕົນໃນວັນສຸດທ້າຍ.

**ຢ່າຕິຕຽນກັນ 14:13-23**

ໂປໂລຮຽກຮ້ອງບໍ່ໃຫ້ຄຣິສຕຽນເຮັດຕາມສິ່ງທີ່ຕົນເອງເຫັນຊອບຫລືວ່າຖືກເທົ່ານັ້ນ ແຕ່ເຮັດທຸກຢ່າງໃຫ້ຄໍານຶງເຖິງຄົນອ່ອນແອດ້ວຍ ເພາະການກະທໍາຕາມລໍາພັງໃຈໃນການໃຊ້ສິດເສຣີພາບໃນພຣະຄຣິດອາດເຮັດໃຫ້ຄວາມເຊື່ອລາງຄົນລົດນ້ອຍຖອຍລົງ ເພາະວ່າຜູ້ນ້ອຍຫລືຜູ້ມີຄວາມເຊື່ອນ້ອຍມັກຈະເບິ່ງຜູ້ໃຫຍ່ຫລືພວກຜູ້ນໍາເປັນແບບຢ່າງ ດັ່ງນັ້ນພວກຜູ້ນໍາ, ຄຣູສອນ ແລະເຖົ້າແກ່ພ້ອມທັງຜູ້ເຊື່ອດົນແລ້ວຄວນຣະມັດຣະວັງໃນການໃຊ້ສິດເສຣີພາບຂອງຕົນຈະເຮັດຫຍັງກໍໃຫ້ຫລຽວຊ້າຍ, ຫລຽວຂວາ ແລະແຫງນໜ້າເບິ່ງຟ້າສາກ່ອນເພື່ອຈະບໍ່ເປັນທີ່ສະດຸດຂອງພີ່ນ້ອງ.

ກ. ຂໍ້ 13-15 ເວົ້າເຖິງການກະທໍາແລະການກິນຫລືບໍ່ກິນ, ຫາກທ່ານກິນແຕ່ພີ່ນ້ອງຕ້ອງສະດຸດກໍຄວນເຊົາກິນ ໂປໂລເວົ້າວ່າຫາກຂືນກິນທ່ານກໍບໍ່ໄດ້ປະຕິບັດຄວາມຮັກ ເພາະວ່າສິ່ງທີ່ທ່ານກິນເຮັດໃຫ້ເຂົາສະດຸດແລະລົ້ມລົງ ຫລືອາດເຊົາເຊື່ອພຣະເຈົ້າກໍເປັນໄດ້. ສິດທິທີ່ເຮົາມີນັ້ນຄວນຍອມສະລະເພື່ອເຫັນແກ່ຄວາມຮັກທີ່ມີຕໍ່ພີ່ນ້ອງໃນໂບດດຽວກັນ, ແຕ່ຄວາມເຊື່ອນັ້ນໃຫ້ຍຶດຮັກສາໄວ້ໃຫ້ດີ.

ຂ. ຂໍ້ 16-17 ໂປໂລເວົ້າຢ່າງໜັກວ່າ *"ເພາະວ່າຣາຊອານາຈັກຂອງພຣະເຈົ້າບໍ່ແມ່ນຫມາຍເຖິງການກິນແລະການດື່ມ"* ແປວ່າການກິນຫລືບໍ່ກິນບໍ່ໄດ້ຊ່ອຍໃຫ້ຜູ້ໃດຂຶ້ນສວັນ ແຕ່ຄວາມຊອບທັມໃນພຣະເຈົ້າຈະນໍາພາໄປສວັນ *"ແຕ່ຫມາຍເຖິງຄວາມຊອບທັມແລະສັນຕິທັມ ກັບຄວາມຊົມຊື່ນຍິນດີທີ່ມາຈາກພຣະວິນຍານບໍຣິສຸດ"* (ຂໍ້ 17).

ຄ. ຂໍ້18-19 ແທນທີ່ຈະມາຖົກຖຽງກັນເຣື່ອງການກິນ ຫລືບໍ່ກິນເຮົາຄວນຊອກສແວງຫາຄວາມປອງດອງເພື່ອຊ່ອຍໃຫ້ຊີວິດຈະເຣີນຂຶ້ນດີກວ່າ.

ງ. ຂໍ້ 20-21 ງານຂອງພຣະເຈົ້າຍິ່ງໃຫຍ່ກວ່າອາຫານການກິນ

ຈ. ຂໍ້ 22-23 ການກະທໍາທີ່ເຮັດໃຫ້ຜູ້ອື່ນສະດຸດກໍເປັນບາບຊະນິດນຶ່ງ

**ຄໍາຖາມ:** ໃຫ້ໃຊ້ຄໍາຖາມໃນບົດຝຶກຫັດ

*ສຈ. ດຣ. ທຸນພັນ ວົງສຸຣິດທ໌*